สาละบาน

ດຳລັດ ........................................................................................................4
ກົດໝາຍ ວ່າດ້ວຍການປະກັນໄພ ..............................................................................5
ພາກທີ I ຫລັກການລວມ ...........................................................................................5
ມາດຕາ 1. ໜ້າທີ່ຂອງກົດໝາຍ ວ່າດ້ວຍການປະກັນໄພ ...................................................5
ມາດຕາ 2. ການດຳເນີນການປະກັນໄພ ........................................................................5
ມາດຕາ 3. ຜູ້ທີ່ພົວພັນໃນສັນຍາປະກັນໄພ ...................................................................5
ມາດຕາ 4. ຂອບເຂດການປະຕິບັດກົດໝາຍ ວ່າດ້ວຍການປະກັນໄພ ....................................6
ມາດຕາ 5. ຮູບແບບຂອງບໍລິສັດປະກັນໄພ ....................................................................6
ມາດຕາ 6. ການຈັດປະເພດປະກັນໄພ .........................................................................6
ມາດຕາ 7. ຄຳຮ້ອງຂໍດຳເນີນທຸລະກິດປະກັນໄພ ...........................................................7
ມາດຕາ 8. ອົງການທີ່ມີສິດອະນຸຍາດໃຫ້ດຳເນີນທຸລະກິດປະກັນໄພ .....................................7
ໝວດ ທີ 2 ການກວດກາແຫ່ງລັດ ...............................................................................8
ມາດຕາ 9. ຈຸດປະສົງຂອງການກວດກາແຫ່ງລັດ ..............................................................8
ມາດຕາ 10. ການແຈ້ງ ແລະ ການກວດກາເອກະສານ .........................................................8
ມາດຕາ 11. ພະນັກງານກວດກາ ...............................................................................8
ມາດຕາ 12. ພັນທະຂອງວິສາຫະກິດປະກັນໄພ ກ່ຽວກັບການກວດກາ ....................................9
ພາກ ທີ III ບໍລິສັດປະກັນໄພຂອງລາວ ແລະສາຂາບໍລິສັດປະກັນໄພຕ່າງປະເທດ, ຄືນກາງປະກັນໄພ, ລະບອບການເງິນ,ການບັນຊີ ແລະ ສະຖິຕິ ..........................................9
ໝວດ ທີ 1 ບໍລິສັດປະກັນໄພຂອງລາວ ແລະ ສາຂາບໍລິສັດປະກັນໄພຕ່າງປະເທດ ........................9
ມາດຕາ 13. ບໍລິສັດປະກັນໄພຂອງລາວ ແລະ ສາຂາບໍລິສັດປະກັນໄພຕ່າງປະເທດ ......................9
ມາດຕາ 14. ມາດຕະຖານຂອງຜູ້ສ້າງຕັ້ງບໍລິສັດປະກັນໄພ ...............................................10
ມາດຕາ 15. ການຈຳກັດຜົນປະໂຫຍດສ່ວນຕົວຂອງບຸກຄົນທີ່ເປັນກຳມະການສະພາບໍລິຫານ ແລະ ຄະນະອຳນວຍການ .........................................................................10
ມາດຕາ 16. ເງື່ອນໄຂຂອງຜູ້ທີ່ໄດ້ຮັບມອບສິດທົ່ວໄປຂອງບໍລິສັດປະກັນໄພ ...........................10
ມາດຕາ 17. ການກຳນົດທຶນຂອງບໍລິສັດຫຸ້ນສ່ວນ .......................................................10
ມາດຕາ 18. ການວາງເງິນຄ້ຳປະກັນຂອງບໍລິສັດປະກັນໄພຂອງລາວ ແລະ ສາຂາບໍລິສັດ ປະກັນໄພຕ່າງປະເທດ ........................................................................11
ມາດຕາ 19. ວິທີການປັບປຸງປະສິດທິຜົນ ຂອງວິສາຫະກິດປະກັນໄພ ..................................11
ມາດຕາ 20. ການໂອນຄັງສັນຍາປະກັນໄພ ..................................................................12
ມາດຕາ 21. ການຖອນອະນຸຍາດ ............................................................................12
ມ າດຕາ 22. ການຂໍລົບລ້າງຄຳຕົກລົງຖອນອະນຸຍາດ .....................................................12

ມາດຕາ 23. ການຊໍາລະສະສາງ ........................................................................13
ມາດຕາ 24. ການຈັດຕັ້ງຊໍາລະສະສາງ ................................................................13
ໝວດ ທີ 2 ຄົນກາງປະກັນໄພ...................................................................................13
ມາດຕາ 25. ການສະເໜີການປະກັນໄພ...........................................................13
ມາດຕາ 26. ຄົນກາງປະກັນໄພ.......................................................................13
ມາດຕາ 27. ມາດຕະຖານດ້ານວິຊາຊີບ...........................................................14
ໝວດ ທີ 3 ລະບອບການເງິນ ....................................................................................14
ມາດຕາ 28. ພັນທະຜູກພັນຕາມລະບຽບການ .................................................14
ມາດຕາ 29. ຄັງແຮປະກັນໄພຊີວິດຂອງຄົນ ແລະ ລະດົມການສະສົມທຶນ ..............14
ມາດຕາ 30. ຄັງແຮປະກັນໄພການເສຍຫາຍ.......................................................15
ມາດຕາ 31. ບຸລິມະສິດຂອງຜູ້ໄດ້ຮັບການປະກັນໄພ ແລະ ຜູ້ທີ່ໄດ້ຮັບຜົນປະໂຫຍດຈາກສັນຍາ.....15
ມາດຕາ 32. ຄວາມສາມາດໃນການໄຊ້ໜີ້ສິນ .....................................................15
ໝວດ ທີ 4 ການບັນຊີ ແລະ ສະຖິຕິ ...........................................................................16
ມາດຕາ 33. ເຈົ້າໜ້າທີ່ກວດສອບການບັນຊີ.........................................................16
ມາດຕາ 34. ແຜນບັນຊີສະເພາະ.......................................................................16
ມາດຕາ 35. ການລາຍງານການບັນຊີ ..................................................................16
ມາດຕາ 36. ປື້ມບັນຊີຕ່າງໆ ຂອງວິສາຫະກິດປະກັນໄພ...........................................16
ພາກ ທີ IV ລະບຽບການກ່ຽວກັບສັນຍາປະກັນໄພ....................................................17
ໝວດ ທີ 1 ເປົ້າໝາຍການປະຕິບັດສັນຍາປະກັນໄພ ແລະ ລະບຽບການກ່ຽວກັບ ການເຮັດໃບປະກັນໄພ.....................................................................................17
ມາດຕາ 37. ເປົ້າໝາຍການປະຕິບັດສັນຍາປະກັນໄພ ..............................................17
ມາດຕາ 38. ການເຮັດໃບປະກັນໄພ...................................................................17
ມາດຕາ 39. ກໍານົດເວລາຂອງໃບປະກັນໄພ .........................................................18
ມາດຕາ 40. ເນື້ອໃນຕົ້ນຕໍຂອງໃບປະກັນໄພ.........................................................18
ມາດຕາ 41. ການສ່ຽງໄພທີ່ມີການຄຸ້ມກັນ...........................................................18
ມາດຕາ 42. ພັນທະຂອງຜູ້ໄດ້ຮັບການປະກັນໄພ ...................................................19
ມາດຕາ 43. ຄ່າທໍານຽມປະກັນໄພ ......................................................................19
ມາດຕາ 44. ການປິດບັງ ຫຼືການ ແຈ້ງການເທັດ ......................................................19
ມາດຕາ 45. ການເມີນເສີຍໃນການແຈ້ງການ ..........................................................20
ມາດຕາ 46. ຂໍ້ຄວາມອັນໃດອັນໜຶ່ງຂອງໃບປະກັນໄພທີ່ເປັນໂມຄະ ..............................20
ໝວດທີ 2 ອາຍຸຄວາມໃນການຮ້ອງຟ້ອງ ແລະ ສານທີ່ມີສິດອໍານາດ .................................20
ມາດຕາ 47. ອາຍຸຄວາມໃນການຮ້ອງຟ້ອງ ..........................................................20

ມາດຕາ 48. ສານທີ່ມີສິດອຳນາດພິຈາລະນາ ຂໍ້ຂັດແຍ່ງ ........................................ 21
ໝວດທີ 3 ການປະກັນໄພກ່ຽວກັບການເສຍຫາຍຊັບສິນບັດ ........................................ 21
ມາດຕາ 49. ຫລັກການຂອງສິນທົດແທນປະກັນໄພ ........................................ 21
ມາດຕາ 50. ການປະກັນໄພທີ່ຕ່ຳກວ່າມູນຄ່າ ຂອງຊັບສິນບັດ ........................................ 21
ມາດຕາ 51. ການສູນເສຍຊັບສິນບັດທີ່ເອົາມາປະກັນໄພ ........................................ 21
ມາດຕາ 52. ການແທນເອົາສິດ ຂອງຜູ້ໄດ້ຮັບການປະກັນໄພ ........................................ 21
ໝວດ ທີ 4 ການປະກັນໄພກ່ຽວກັບຕົວບຸກຄົນ ........................................ 22
ມາດຕາ 53. ຫລັກການສະເພາະ ໃນການປະກັນໄພ ກ່ຽວກັບຕົວບຸກຄົນ ........................................ 22
ມາດຕາ 54. ການປະກັນໄພຊີວິດ ........................................ 22
ມາດຕາ 55. ເນື້ອໃນຂອງສັນຍາປະກັນໄພ ກ່ຽວກັບຕົວບຸກຄົນ ........................................ 22
ມາດຕາ 56. ການຂ້າຕົວຕາຍ ແລະ ການຄາດຕະກຳ ........................................ 22
ໝວດ ທີ 5 ການປະກັນໄພ ກ່ຽວກັບຄວາມຮັບຜິດຊອບທາງແພ່ງ ........................................ 23
ມາດຕາ 57. ຄວາມຮັບຜິດຊອບໂດຍບໍ່ຖືຄວາມຜິດ. ........................................ 23
ມາດຕາ 58. ການທົດແທນການເສຍຫາຍ ........................................ 23
ມາດຕາ 59. ການປະກັນໄພຍານພາຫະນະ ........................................ 24
ມາດຕາ 60. ການເສຍສິດ ຍ້ອນການມືນເມົາ ........................................ 24
ມາດຕາ 61. ການອອກ ແລະ ການມອບໃບຢັ້ງຢືນປະກັນໄພ ........................................ 24
ພາກ ທີ V ມາດຕະການຕໍ່ຜູ້ກະທຳຜິດ ........................................ 24
ມາດຕາ 62. ການດຳເນີນທຸລະກິດປະກັນໄພ ໂດຍບໍ່ໄດ້ຮັບອະນຸຍາດ ........................................ 24
ມາດຕາ 63. ການລະເມີດລະບຽບກ່ຽວກັບມາດຕະຖານ ແລະ ການຈຳກັດຜົນປະໂຫຍດ ........................................ 25
ມາດຕາ 64. ການສະເໜີ ແລະ ການເຜີຍແຜ່ເອກະສານເທັດ ........................................ 25
ມາດຕາ 65. ການທີ່ບໍ່ສະໜອງເອກະສານ ........................................ 25
ມາດຕາ 66. ການລະເມີດກົດລະບຽບຂອງບໍລິສັດ ແລະ ລະບອບການເງິນ ........................................ 25
ມາດຕາ 67. ການລະເມີດກົດລະບຽບ ການເປັນຄົນກາງ ປະກັນໄພ ........................................ 26
ມາດຕາ 68. ການລະເມີດລະບຽບການປະກັນໄພ ກ່ຽວກັບຍານພາຫະນະ ........................................ 26
ພາກ ທີ VI ບົດບັນຍັດສຸດທ້າຍ ........................................ 26
ມາດຕາ 69. ການຈັດຕັ້ງປະຕິບັດ ........................................ 26

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ເອກະພາບ ສັງຄົມນິຍົມ

ເລກທີ 101/ປທປທ.

# ດຳລັດ

## ຂອງປະທານປະເທດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ກ່ຽວກັບການປະກາດໃຊ້ກົດໝາຍການປະກັນໄພ

**- ອີງຕາມ ມະຕິຂອງກອງປະຊຸມຜູ້ແທນປະຊາຊົນທົ່ວປະເທດ ຄັ້ງວັນທີ 2 ທັນວາ 1975 ວ່າດ້ວຍການແຕ່ງຕັ້ງປະທານປະເທດ.**

- ອີງຕາມ ກົດໝາຍວ່າດ້ວຍ ສະພາປະຊາຊົນສູງສຸດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 04/ສປສ ລົງວັນທີ 19 ເມສາ 1988.

**- ອີງຕາມ ມະຕິຕົກລົງຂອງກອງປະຊຸມ ຄັ້ງທີ 5 ສະໄໝສາມັນຂອງສະພາປະຊາຊົນສູງສຸດ ຊຸດທີ II ກ່ຽວກັບການຮັບຮອງເອົາກົດໝາຍການປະກັນໄພ ສະບັບເລກທີ 11/90/ສປສ ລົງວັນທີ 18 ທັນວາ 1990.**

ປະທານປະເທດ
ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກດຳລັດ :

ມາດຕາ 1: ປະກາດໃຊ້ກົດໝາຍການປະກັນໄພ.
ມາດຕາ 2: ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ໄດ້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 24 ທັນວາ 1990
ຜູ້ວ່າການແທນປະທານປະເທດ
ພູມີ ວົງວິຈິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ເອກະພາບ ສັງຄົມນິຍົມ

ສະພາປະຊາຊົນສູງສຸດ ເລກທີ 11/90/ສປສ

# ກົດໝາຍ ວ່າດ້ວຍການປະກັນໄພ

## ພາກທີ I ຫລັກການລວມ

### ມາດຕາ 1. ໜ້າທີ່ຂອງກົດໝາຍ ວ່າດ້ວຍການປະກັນໄພ

ກົດໝາຍ ວ່າດ້ວຍການປະກັນໄພ ມີໜ້າທີ່ຊຸກຍູ້ ແລະ ປົກປັກຮັກສາພື້ນຖານເສດຖະກິດ-ສັງຄົມ ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ດັດສົມສາຍພົວພັນທາງດ້ານປະກັນໄພ, ຮັບປະກັນການປະຕິບັດສິດ ແລະ ພັນທະລະຫວ່າງວິສາຫະກິດ ທີ່ດຳເນີນທຸລະກິດປະກັນໄພ ກັບບຸກຄົນ ຫລື ນິຕິບຸກຄົນ ຜູ້ທີ່ໄດ້ຮັບການປະກັນໄພ, ຍົກສູງຄວາມຮັບຜິດຊອບ ຂອງວິສາຫະກິດທີ່ດຳເນີນທຸລະກິດປະກັນໄພ ໃນການປະຕິບັດກົດໝາຍ ຂອງລັດ ແລະ ຮັບປະກັນການກວດກາແຫ່ງລັດ ຕໍ່ການດຳເນີນທຸລະກິດປະກັນໄພ.

### ມາດຕາ 2. ການດຳເນີນການປະກັນໄພ

ການດຳເນີນການປະກັນໄພ ແມ່ນສັນຍາຊຶ່ງຝ່າຍໜຶ່ງເອີ້ນວ່າ: "ຜູ້ເຊັນເອົາການປະກັນໄພ" ມີຄວາມຍິນດີຈ່າຍຄ່າທຳນຽມປະກັນໄພ ເພື່ອຈຸດປະສົງຈະໄດ້ຮັບການທົດແທນຄ່າເສຍຫາຍສຳລັບຕົນເອງ ຫລື ບຸກຄົນທີ່ສາມໃນເມື່ອໄພທີ່ສ່ຽງນັ້ນຫາກໄດ້ເກີດຂຶ້ນ ແລະ ອີກຝ່າຍໜຶ່ງເອີ້ນວ່າ "ຜູ້ປະກັນໄພ" ຊຶ່ງຮັບປະກັນການສ່ຽງໄພດ້ວຍການທົດແທນຄືນ.

### ມາດຕາ 3. ຜູ້ທີ່ພົວພັນໃນສັນຍາປະກັນໄພ

ຜູ້ທີ່ພົວພັນໃນສັນຍາປະກັນໄພມີ : ຜູ້ປະກັນໄພ, ຜູ້ໄດ້ຮັບການປະກັນໄພ ຫລື ຜູ້ເຊັນເອົາການປະກັນໄພ ແລະ ຜູ້ໄດ້ຮັບຜົນປະໂຫຍດ.

ຜູ້ປະກັນໄພ ແມ່ນວິສາຫະກິດ ທີ່ໄດ້ຮັບອະນຸຍາດຈາກລັດ ໃຫ້ດຳເນີນທຸລະກິດປະກັນໄພ.

ຜູ້ໄດ້ຮັບການປະກັນໄພ ແມ່ນຜູ້ທີ່ໄດ້ຮັບການຄ້ຳປະກັນ ກ່ຽວກັບຊີວິດ ຫລື ຊັບສົມບັດຈາກວິສາຫະກິດປະກັນໄພ.

**ຜູ້ເຊັນເອົາການປະກັນໄພ ແມ່ນຜູ້ອອກໜ້າເຊັນສັນຍາປະກັນໄພ ຊຶ່ງຕົກລົງຈ່າຍຄ່າທຳນຽມປະກັນໄພ ທີ່ແນ່ໃສ່ຄໍ້າປະກັນຊີວິດ ຫລື ຊັບສິນບັດຂອງຕົນເອງ (ໃນກໍລະນີນີ້ ແມ່ນຜູ້ດຽວກັນກັບຜູ້ໄດ້ຮັບການປະກັນໄພ) ຫລື ຂອງບຸກຄົນທີ່ສາມ.**

**ຜູ້ໄດ້ຮັບຜົນປະໂຫຍດ ແມ່ນຜູ້ທີ່ໄດ້ຮັບສິນປະກັນໄພ ຫລື ສິນທົດແທນປະກັນໄພ ຕາມທີ່ໄດ້ກຳນົດໄວ້ ໃນສັນຍາປະກັນໄພ ເມື່ອການເສຍຫາຍຫາກໄດ້ເກີດຂຶ້ນ.**

## ມາດຕາ 4. ຂອບເຂດການປະຕິບັດກົດໝາຍ ວ່າດ້ວຍການປະກັນໄພ

**ກົດໝາຍວ່າດ້ວຍການປະກັນໄພສະບັບນີ້ ມີຜົນບັງຄັບໃຊ້ຕໍ່ບັນດາ ວິສາຫະກິດປະກັນໄພ ດັ່ງຕໍ່ໄປນີ້:**

1. ວິສາຫະກິດປະກັນໄພ ທີ່ເຮັດສັນຍາຜູກພັນ ຊຶ່ງການປະຕິບັດສັນຍານັ້ນ ຂຶ້ນກັບລະຍະຊີວິດຂອງຜູ້ໄດ້ຮັບການປະກັນໄພ;
2. ວິສາຫະກິດປະກັນໄພທຸກຂະແໜງ ທີ່ໄດ້ເກັບຄ່າທຳນຽມປະກັນໄພ ແລະ ຮັບປະກັນການຈ່າຍສິນທົດແທນປະກັນໄພ ໃນກໍລະນີໄພທີ່ສ່ຽງນັ້ນຫາກໄດ້ເກີດຂຶ້ນ;
3. ວິສາຫະກິດປະກັນໄພ ທີ່ລະດົມການສະສົມທຶນດ້ວຍການເຮັດສັນຍາຜູກພັນໂດຍສະເພາະ.

## ມາດຕາ 5. ຮູບແບບຂອງບໍລິສັດປະກັນໄພ

**ວິສາຫະກິດປະກັນໄພ ແມ່ນນິຕິບຸກຄົນ ທີ່ດຳເນີນທຸລະກິດປະກັນໄພ ຫລື ລະດົມການສະສົມທຶນ.**

**ມີແຕ່ວິສາຫະກິດປະກັນໄພ ໃນຮູບແບບບໍລິສັດຫຸ້ນສ່ວນ, ສາຂາບໍລິສັດປະກັນໄພຕ່າງປະເທດເທົ່ານັ້ນ ຈຶ່ງມີສິດດຳເນີນທຸລະກິດທີ່ໄດ້ກ່າວໄວ້ໃນມາດຕາ 4 ຂອງກົດໝາຍສະບັບນີ້.**

**ວິສາຫະກິດທີ່ກ່າວໄວ້ໃນຂໍ້ 2 ມາດຕາ 4 ຂອງກົດໝາຍສະບັບນີ້ ກໍຈະບໍ່ມີສິດດຳເນີນທຸລະກິດຕາມທີ່ໄດ້ກ່າວໄວ້ໃນຂໍ້ 1 ແລະ ຂໍ້ 3 ມາດຕາ 4 ຂອງກົດໝາຍສະບັບນີ້ ເວັ້ນເສຍແຕ່ ຫາກໄດ້ຮັບອະນຸຍາດຈາກອົງການ ທີ່ມີສິດອຳນາດຂອງລັດ.**

## ມາດຕາ 6. ການຈັດປະເພດປະກັນໄພ

**ການເຄື່ອນໄຫວປະກັນໄພໄດ້ຈັດແບ່ງເປັນປະເພດດັ່ງນີ້:**

1. ການປະກັນໄພກ່ຽວກັບ ການເສຍຫາຍຊັບສິນບັດ;

ການປະກັນໄພກ່ຽວກັບຊັບສິນບັດ ແມ່ນການປະກັນໄພກ່ຽວກັບການເສຍ ຫາຍຊັບສິນບັດທີ່ເກີດຂຶ້ນ ໃນການຜະລິດ, ທຸລະກິດ ແລະ ໃນຊີວິດເຊັ່ນ : ໄຟໄໝ້ໂຮງງານ, ໄຟໄໝ້ເຮືອນ, ຄົນລັກສິ່ງຂອງ ແລະ ອື່ນໆ ຊຶ່ງຜູ້ປະກັນໄພຕ້ອງໄດ້ທົດແທນໃຫ້ຜູ້ໄດ້ຮັບການປະກັນໄພ.

2. ການປະກັນໄພຄວາມຮັບຜິດຊອບທາງແພ່ງ;

ການປະກັນໄພຄວາມຮັບຜິດຊອບທາງແພ່ງ ແມ່ນການປະກັນໄພ ກ່ຽວກັບການໄຊ້ຄ່າເສຍ ຫາຍທາງແພ່ງ ຊຶ່ງຜູ້ປະກັນໄພຕ້ອງໄຊ້ແທນ ຫລື ໄຊ້ຕາງຜູ້ໄດ້ຮັບການປະກັນໄພ.

3. ການປະກັນໄພຕົວບຸກຄົນ ແລະ ລະດົມການສະສົມທຶນ;

ການປະກັນໄພຕົວບຸກຄົນ ແລະ ລະດົມການສະສົມທຶນ ແມ່ນການປະກັນໄພທີ່ແນໃສ່ທົດແທນຄ່າເສຍຫາຍ ໃນກໍລະນີທີ່ເສຍຊີວິດ ຫລື ເສັຽສຸຂະພາບ ແລະ ໄດ້ຮັບສິນປະກັນໄພ ໃນກໍລະນີທີ່ຍັງບໍ່ໄດ້ເສຍຊີວິດ ຕາມທີ່ໄດ້ກໍານົດໄວ້ໃນໃບປະກັນໄພ.

## ພາກທີ II ການອະນຸຍາດໃຫ້ດໍາເນີນທຸລະກິດປະກັນໄພ ແລະ ການກວດກາແຫ່ງລັດ

### ໝວດ ທີ 1 ການອະນຸຍາດໃຫ້ດໍາເນີນທຸລະກິດປະກັນໄພ

**ມາດຕາ 7. ຄໍາຮ້ອງຂໍດໍາເນີນທຸລະກິດປະກັນໄພ**

ບຸກຄົນ ຫລື ນິຕິບຸກຄົນ ທີ່ຮ້ອງຂໍດໍາເນີນທຸລະກິດປະກັນໄພນັ້ນ ຕ້ອງປະກອບເອກະສານຄົບຖ້ວນ ຕາມດໍາລັດຂອງສະພາລັດຖະມົນຕີທີ່ໄດ້ກໍານົດໄວ້.

ຄໍາຮ້ອງຂໍດໍາເນີນທຸລະກິດປະກັນໄພນັ້ນ ຕ້ອງຍື່ນຕໍ່ລັດຖະມົນຕີກະຊວງເສດຖະກິດແຜນການ ແລະ ການເງິນ. ລັດຖະມົນຕີກະຊວງເສດຖະກິດແຜນການ ແລະ ການເງິນ ຕ້ອງພິຈາລະນາຄໍາຮ້ອງຂໍ ແລະ ຕົກລົງພາຍໃນກໍານົດສາມເດືອນ ນັບແຕ່ມື້ໄດ້ຮັບຄໍາຮ້ອງຂໍເປັນຕົ້ນໄປ.

**ມາດຕາ 8. ອົງການທີ່ມີສິດອະນຸຍາດໃຫ້ດໍາເນີນທຸລະກິດປະກັນໄພ**

ບຸກຄົນ ຫລື ນິຕິບຸກຄົນ ທີ່ມີຈຸດປະສົງຢາກດໍາເນີນທຸລະກິດປະກັນໄພຕາມທີ່ໄດ້ກ່າວໄວ້ໃນມາດຕາ 4 ຂອງກົດໝາຍສະບັບນີ້ ຈະເລີ່ມດໍາເນີນກິດຈະການ ຂອງຕົນໄດ້ກໍຕໍ່ເມື່ອຫາກໄດ້ຮັບອະນຸຍາດຈາກລັດຖະມົນຕີກະຊວງເສດຖະກິດແຜນການ ແລະ ການເງິນເສັຽກ່ອນ.

ລັດຖະມົນຕີກະຊວງເສດຖະກິດແຜນການ ແລະ ການເງິນ ມີສິດຕົກລົງອະນຸຍາດໃຫ້ຜູ້ຮ້ອງຂໍ ດໍາເນີນທຸລະກິດປະກັນໄພຂະແໜງໜຶ່ງ ຫລື ຫລາຍຂະແໜງກໍໄດ້. ວິສາຫະກິດປະກັນໄພມີສິດດໍາເນີນແຕ່ກິດຈະການສະເພາະ ຂະແໜງທີ່ຕົນໄດ້ຮັບອະນຸຍາດເທົ່ານັ້ນ.

ໃນກໍລະນີທີ່ມີຄວາມຈໍາເປັນຍ້ອນສະພາບການ ຂອງຕະຫລາດປະກັນໄພ ລັດຖະມົນຕີກະຊວງເສດຖະກິດແຜນການ ແລະ ການເງິນ ມີສິດຈໍາກັດ ຫລື ໂຈະການອອກໃບອະນຸຍາດເພີ່ມເຕີມໃນການດໍາເນີນທຸລະກິດປະກັນໄພ ຂະແໜງໃດໜຶ່ງ ຫລື ຫລາຍຂະແໜງ ຫລື ທຸກຂະແໜງກໍໄດ້.

ການອອກໃບອະນຸຍາດ, ການປ່ຽນແປງ, ການຈໍາກັດ, ການໂຈະ ຫລື ການຖອນໃບອະນຸຍາດໃຫ້ດໍາເນີນທຸລະກິດປະກັນໄພນັ້ນ ຕ້ອງເຮັດເປັນຄໍາຕົກລົງ ຂອງລັດຖະມົນຕີກະຊວງເສດຖະກິດແຜນການ ແລະ ການເງິນ.

## ໝວດ ທີ 2 ການກວດກາແຫ່ງລັດ

### ມາດຕາ 9. ຈຸດປະສົງຂອງການກວດກາແຫ່ງລັດ

ການດຳເນີນການກວດກາແຫ່ງລັດ ຕໍ່ວິສາຫະກິດປະກັນໄພ ແມ່ນແນໃສ່ປົກປັກຮັກສາຜົນປະໂຫຍດ ຂອງຜູ້ໄດ້ຮັບການປະກັນໄພ ຫລື ຜູ້ເຊັນເອົາການປະກັນໄພ ແລະ ຜູ້ໄດ້ຮັບຜົນປະໂຫຍດຕ່າງໆ ຈາກສັນຍາປະກັນໄພ ແລະ ລະດົມການສະສົມທຶນ.

### ມາດຕາ 10. ການແຈ້ງ ແລະ ການກວດກາເອກະສານ

ກ່ອນຈະນຳໃຊ້ເອກະສານກ່ຽວກັບ ເງື່ອນໄຂທົ່ວໄປຂອງໃບປະກັນໄພ ຫລື ຂໍ້ສະເໜີ, ໃບສະເໜີຂໍເອົາປະກັນໄພ, ໃບໂຄສະນາ ແລະ ແບບພິມຕ່າງໆ ທີ່ຈະນຳອອກແຈກຢາຍ ຫລື ເຜີຍແຜ່ຕໍ່ມວນຊົນ ຫລື ມອບໃຫ້ຜູ້ຖືສັນຍາປະກັນໄພ ຫລື ສະມາຊິກຂອງຕົນນັ້ນ ວິສາຫະກິດປະກັນໄພທຸກຂະແໜງ ຕ້ອງນຳສະເໜີເອກະສານດັ່ງກ່າວ ໃຫ້ລັດຖະມົນຕີກະຊວງເສດຖະກິດແຜນການ ແລະ ການເງິນ ອະນຸຍາດເສຍກ່ອນ.

ໃນກໍລະນີທີ່ມີການປ່ຽນແປງ ຫລື ດັດແກ້ກົດລະບຽບ, ວິສາຫະກິດປະກັນໄພ ທຸກຂະແໜງຕ້ອງແຈ້ງ ໃຫ້ລັດຖະມົນຕີກະຊວງເສດຖະກິດແຜນການ ແລະ ການເງິນຊາບ ພາຍໃນກຳນົດ ສິບຫ້າວັນ ນັບແຕ່ມື້ກອງປະຊຸມໃຫຍ່ ຂອງວິສາຫະກິດໄດ້ລົງຄະແນນສຽງຮັບຮອງ ເອົາເປັນຕົ້ນໄປ.

ວິສາຫະກິດປະກັນໄພ ທຸກຂະແໜງຕ້ອງແຈ້ງໃຫ້ລັດຖະມົນຕີກະຊວງເສດຖະກິດແຜນການ ແລະ ການເງິນ ຊາບ ກ່ຽວກັບພື້ນຖານຄິດໄລ່ ແລະ ອັດຕາຄ່າທຳນຽມປະກັນໄພທີ່ຕົນໄດ້ສະເໜີປະຕິບັດ.

ໃນກໍລະນີທີ່ວິສາຫະກິດປະກັນໄພ ຫາກໄດ້ຕົກລົງປ່ຽນແປງຢ່າງໃດຢ່າງໜຶ່ງ ກ່ຽວກັບຄ່າທຳນຽມປະກັນໄພ, ບັນດາເງື່ອນໄຂທົ່ວໄປຂອງສັນຍາ, ການຈັດຕັ້ງວິຊາຊີບ, ການແກ່ງແຍ່ງ ຫລື ການຄຸ້ມຄອງທາງດ້ານການເງິນແລ້ວ ຜູ້ອຳນວຍການວິສາຫະກິດ ຕ້ອງແຈ້ງຄຳຕົກລົງນັ້ນໃຫ້ລັດຖະມົນຕີກະຊວງເສດຖະກິດແຜນການ ແລະ ການເງິນຊາບ ກ່ອນຈະນຳອອກປະຕິບັດ.

ລັດຖະມົນຕີກະຊວງເສດຖະກິດແຜນການ ແລະ ການເງິນ ມີສິດທວງໃຫ້ດັດແປງອັດຕາຄ່າທຳນຽມປະກັນໄພ, ທຸກເອກະສານ ທີ່ຈະນຳໃຊ້ເຂົ້າໃນການດຳເນີນທຸລະກິດປະກັນໄພ ຫລື ລະດົມການສະສົມທຶນຈາກມວນຊົນ ນັບທັງຂ່າວສານ ທີ່ຈະນຳໄປເຜີຍແຜ່.

### ມາດຕາ 11. ພະນັກງານກວດກາ

**ພະນັກງານກວດກາ ແມ່ນພະນັກງານທີ່ໄດ້ທຳການປະຕິຍານຕົວ ແລະ ຖືກບັນຈຸເຂົ້າຮັບໜ້າທີ່ ຕາມເງື່ອນໄຂ ທີ່ໄດ້ກຳນົດໄວ້ຢູ່ໃນຄຳຕົກລົງສະເພາະ ຂອງລັດຖະມົນຕີກະຊວງເສດຖະກິດແຜນການ ແລະ ການເງິນ ແລະ ໄດ້ຮັບການມອບໝາຍໃຫ້ຕິດຕາມຢ່າງເປັນປະຈຳຢູ່ວິສາຫະກິດປະກັນໄພ.**

ພະນັກງານກວດກາ ມີສິດກວດກາກັບທີ່ໄດ້ທຸກເວລາ ແລະ ທຸກການເຄື່ອນໄຫວ ຂອງວິສາຫະກິດປະກັນໄພ. ພະນັກງານກວດກາ ຕ້ອງຮັກສາຄວາມລັບກ່ຽວກັບທຸລະກິດ ທີ່ຕົນໄດ້ຮູ້ໃນເວລາປະຕິບັດໜ້າທີ່ຂອງຕົນ.

ພະນັກງານກວດກາ ມີສິດກວດກາທຸກສະມຸດບັນຊີ, ປຶ້ມໃຫຍ່ບັນທຶກ, ສັນຍາ, ເອກະສານນຳສົ່ງ, ຈົດໝາຍບັນທຶກ, ເອກະສານບັນຊີ ຫລື ເອກະສານອື່ນໆ ທີ່ກ່ຽວກັບສະພາບ ແລະ ການເຄື່ອນໄຫວທີ່ຜ່ານມາ ຂອງວິສາຫະກິດປະກັນໄພ, ກວດກາຄັງເງິນສົດ ແລະ ຊັບສິນບັດທີ່ມີຄ່າ.

ພະນັກງານກວດກາຕ້ອງເຮັດບົດສະຫລຸບ ກ່ຽວກັບການກວດກາຂອງຕົນ, ຢັ້ງຢືນຄວາມເປັນຈິງທີ່ຕົນໄດ້ພົບເຫັນ ແລະ ລາຍງານໃຫ້ລັດຖະມົນຕີກະຊວງເສດຖະກິດແຜນການ ແລະ ການເງິນຊາບ ເພື່ອຈະໄດ້ແນະນຳ ວິທີການແກ້ໄຂ ທີ່ເຫັນວ່າມີຄວາມຈຳເປັນ.

ໃນການກວດການັ້ນ ພະນັກງານກວດກາຕ້ອງປະຕິບັດ ຕາມລະບຽບການຂອງການກວດກາການເງິນ ແລະ ການບັນຊີ.

### ມາດຕາ 12. ພັນທະຂອງວິສາຫະກິດປະກັນໄພ ກ່ຽວກັບການກວດກາ

**ວິສາຫະກິດປະກັນໄພທຸກຂະແໜງ, ບຸກຄົນ ຫລື ນິຕິບຸກຄົນ ທີ່ໄດ້ຮັບການມອບສິດ ຈາກວິສາຫະກິດປະກັນໄພໃດໜຶ່ງໃຫ້ເຮັດສັນຍາ ຫລື ຄຸ້ມຄອງສັນຍາ, ບຸກຄົນ ຫລື ນິຕິບຸກຄົນ ທີ່ໄດ້ປະກອບອາຊີບ ເປັນຄົນກາງປະກັນໄພ ຕ້ອງຢູ່ພາຍໃຕ້ການກວດກາ ຂອງພະນັກງານກວດກາ.**

ວິສາຫະກິດປະກັນໄພ ຕ້ອງອຳນວຍຄວາມສະດວກໃຫ້ແກ່ພະນັກງານກວດກາ ທີ່ໄດ້ປະຕິບັດໜ້າທີ່ຢູ່ຕາມຂະແໜງ ຫລື ສາຂາວິສາຫະກິດຂອງຕົນ ໃນການກວດກາທຸກປຶ້ມໃຫຍ່ບັນທຶກ ແລະ ເອກະສານຕ່າງໆ ທີ່ໄດ້ກ່າວໄວ້ ໃນມາດຕາ 11 ຂອງກົດໝາຍສະບັບນີ້ ພ້ອມທັງຈັດຫາ ພະນັກງານ ທີ່ມີຄວາມສາມາດ ໃຫ້ເພື່ອເອົາຂໍ້ມູນຕ່າງໆ ຊຶ່ງພະນັກງານກວດກາ ເຫັນມີຄວາມຈຳເປັນ.

## ພາກ ທີ III ບໍລິສັດປະກັນໄພຂອງລາວ ແລະສາຂາບໍລິສັດປະກັນໄພຕ່າງປະເທດ, ຄົນກາງປະກັນໄພ, ລະບອບການເງິນ,ການບັນຊີ ແລະ ສະຖິຕິ

## ໝວດ ທີ 1 ບໍລິສັດປະກັນໄພຂອງລາວ ແລະ ສາຂາບໍລິສັດປະກັນໄພຕ່າງປະເທດ

### ມາດຕາ 13. ບໍລິສັດປະກັນໄພຂອງລາວ ແລະ ສາຂາບໍລິສັດປະກັນໄພຕ່າງປະເທດ

**ບໍລິສັດປະກັນໄພຂອງລາວ ແມ່ນບໍລິສັດປະກັນໄພ ທີ່ໄດ້ຮັບອະນຸຍາດສ້າງຕັ້ງຂຶ້ນຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ດ້ວຍການລົງທຶນຮ່ວມ ລະຫວ່າງບຸກຄົນ ຫລື ນິຕິບຸກຄົນລາວນຳກັນ ຫລື ການລົງທຶນລະຫວ່າງບຸກຄົນ ຫລື ນິຕິບຸກຄົນລາວ ຮ່ວມກັບບຸກຄົນ ຫລື ນິຕິບຸກຄົນຕ່າງປະເທດ ແລະໄດ້ຂຶ້ນທະບຽນຢ່າງຖືກຕ້ອງຕາມກົດໝາຍລາວ.**

ສາຂາບໍລິສັດປະກັນໄພຕ່າງປະເທດ ແມ່ນການຈັດຕັ້ງຂອງບໍລິສັດປະກັນໄພຕ່າງປະເທດ ທີ່ໄດ້ຮັບອະນຸຍາດຈາກລັດຖະບານລາວ ໃຫ້ມາດໍາເນີນທຸລະກິດປະກັນໄພ ຢູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ໄດ້ຂຶ້ນທະບຽນຢ່າງຖືກຕ້ອງຕາມກົດໝາຍລາວ.

### ມາດຕາ 14. ມາດຕະຖານຂອງຜູ້ສ້າງຕັ້ງບໍລິສັດປະກັນໄພ

**ບຸກຄົນຜູ້ໃດຜູ້ໜຶ່ງ ຈະບໍ່ມີສິດສ້າງຕັ້ງ, ນໍາພາ, ບໍລິຫານ, ຄຸ້ມຄອງ ແລະ ຈັດການຊໍາລະສະສາງວິສາຫະກິດປະກັນໄພ ຖ້າວ່າບຸກຄົນຜູ້ນັ້ນຫາກໄດ້ກະທໍາຜິດທາງອາຍາ ໃນສະຖານລັກຊັບ, ຍັກຍອກຊັບ, ສໍ້ໂກງຊັບ, ອອກ ເຊັກບໍ່ມີເງິນ, ກະທໍາຜິດທີ່ແຕະຕ້ອງເຖິງສິນເຊື່ອຂອງລັດ ແລະ ຊຸກເຊື່ອງສິ່ງທີ່ໄດ້ມາຈາກການກະທໍາຜິດ ຕາມທີ່ ໄດ້ກ່າວມານີ້ ແລະ ໃນສະຖານຄະຣຸໂທດ.**

### ມາດຕາ 15. ການຈໍາກັດຜົນປະໂຫຍດສ່ວນຕົວຂອງບຸກຄົນທີ່ເປັນກໍາມະການສະພາບໍລິຫານ ແລະ ຄະນະອໍານວຍການ

ຫ້າມບຸກຄົນທີ່ເປັນກໍາມະການສະພາບໍລິຫານ ແລະ ຄະນະອໍານວຍການບໍລິສັດປະກັນໄພ ສວຍໂອກາດສ້າງ ຫລື ຮັກສາຜົນປະໂຫຍດສ່ວນຕົວໂດຍກົງ ຫລື ທາງອ້ອມ ຢູ່ໃນວິສາຫະກິດປະກັນໄພ, ໃນຕະຫລາດປະກັນໄພ, ໃນການເຮັດສັນຍາ, ກິດຈະການການຄ້າ ຫລື ການເງິນ ທີ່ເຮັດຮ່ວມກັບບໍລິສັດປະກັນໄພ ເວັ້ນເສຍແຕ່ພວກກ່ຽວຫາກໄດ້ຮັບອະນຸຍາດ ຈາກກອງປະຊຸມໃຫຍ່ຂອງບໍລິສັດເທົ່ານັ້ນ. ບົດສະຫລຸບປະຈໍາປີທີ່ສະເໜີຕໍ່ກອງປະຊຸມໃຫຍ່ນັ້ນ ຕ້ອງລາຍງານກ່ຽວກັບການດໍາເນີນ ກິດຈະການຊຶ່ງກອງປະຊຸມໃຫຍ່ ຂອງວິສາຫະກິດໄດ້ອະນຸຍາດໃຫ້ນັ້ນ. ການລາຍງານກ່ຽວກັບການດໍາເນີນກິດຈະການດັ່ງກ່າວ ຕ້ອງໄດ້ເອົາເຂົ້າໃນບົດລາຍງານ ຂອງເຈົ້າໜ້າທີ່ກວດສອບການບັນຊີ.

### ມາດຕາ 16. ເງື່ອນໄຂຂອງຜູ້ທີ່ໄດ້ຮັບມອບສິດທົ່ວໄປຂອງບໍລິສັດປະກັນໄພ

ຜູ້ທີ່ໄດ້ຮັບມອບສິດທົ່ວໄປ ຂອງບໍລິສັດປະກັນໄພຕ້ອງໃຫ້ມີໃບທະບຽນໂທດ ແລະ ໃບຢັ້ງຢືນສິດອໍານາດໃນການຄຸ້ມຄອງສາຂາ ຂອງບໍລິສັດປະກັນໄພໂດຍກົງ.

ຜູ້ທີ່ໄດ້ຮັບມອບສິດທົ່ວໄປຕ້ອງຖືບັນຊີສະເພາະ ຂອງແຕ່ລະຂະແໜງປະກັນໄພທີ່ຕົນໄດ້ດໍາເນີນຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

### ມາດຕາ 17. ການກໍານົດທຶນຂອງບໍລິສັດຫຸ້ນສ່ວນ

**ບໍລິສັດຫຸ້ນສ່ວນຕ້ອງມີທຶນວິສາຫະກິດເພື່ອດໍາເນີນກິດຈະການປະກັນໄພ ຢ່າງໜ້ອຍເທົ່າກັນກັບຈໍານວນທີ່ໄດ້ບົ່ງໄວ້ໃນດໍາລັດ ຂອງສະພາລັດຖະມົນຕີ. ເອກະສານໃດໜຶ່ງ ຂອງບໍລິສັດປະກັນໄພ ທີ່ຈະນໍາອອກເຜີຍແຜ່ຕໍ່ມວນຊົນນັ້ນ ກໍ່ຕ້ອງໃຫ້ບອກແຈ້ງເຖິງຈໍານວນທຶນ ວິສາຫະກິດຂອງຕົນ.**

### ມາດຕາ 18. ການວາງເງິນຄໍ້າປະກັນຂອງບໍລິສັດປະກັນໄພຂອງລາວ ແລະ ສາຂາບໍລິສັດປະກັນໄພຕ່າງປະເທດ

ບໍລິສັດປະກັນໄພຂອງລາວ ແລະ ສາຂາບໍລິສັດປະກັນໄພຕ່າງປະເທດ ທີ່ດໍາເນີນທຸລະກິດປະກັນໄພຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຕ້ອງວາງເງິນຄໍ້າປະກັນຢູ່ທະນາຄານທີ່ຕັ້ງຢູ່ໃນດິນແດນຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຕາມຈໍານວນທີ່ໄດ້ກໍານົດໄວ້ ໃນດໍາລັດຂອງສະພາລັດຖະມົນຕີ.

ບໍລິສັດປະກັນໄພຂອງລາວ ຫລື ສາຂາບໍລິສັດປະກັນໄພຕ່າງປະເທດ ອາດຈະວາງເງິນຄໍ້າປະກັນດ້ວຍເງິນກີບ ຫລື ເງິນຕາຕ່າງປະເທດ, ພັນທະບັດຂອງລັດ ຫລື ພັນທະບັດທີ່ໄດ້ຮັບປະກັນຈາກລັດກໍໄດ້. ຖ້າຫາກວ່າໄດ້ດອກເບ້ຍ ຈາກເງິນຄໍ້າປະກັນທີ່ວາງໄວ້ຢູ່ທະນາຄານນັ້ນ ບໍລິສັດ ຫລື ສາຂາບໍລິສັດກໍມີສິດນໍາໃຊ້ໄດ້.

ໃນກໍລະນີທີ່ຄັງແຮດ້ານວິຊາການ ຫລື ເງິນຝາກຫລູບ ທີ່ຄູ່ກົງກັນກັບຄັງແຮດັ່ງກ່າວ ຫາກບໍ່ພຽງພໍນັ້ນ ຈະອະນຸຍາດໃຫ້ນໍາໃຊ້ເງິນຄໍ້າປະກັນ ທີ່ກ່າວມາຂ້າງເທິງນີ້ ເຂົ້າສະເພາະໃນການທົດແທນ ໃຫ້ແກ່ຜູ້ໄດ້ຮັບການປະກັນໄພ ຫລື ຜູ້ທີ່ໄດ້ຮັບຜົນປະໂຫຍດ ຈາກສັນຍາປະກັນໄພເທົ່ານັ້ນ.

ຖ້າວ່າບໍລິສັດປະກັນໄພ ຫາກມີການຢຸດເຊົາ ຫລື ພວມທໍາການຊໍາລະສະສາງດ້ານໜີ້ສິນ ແລະ ຊັບສິນນັ້ນກໍຈະຕ້ອງໄດ້ສົ່ງເງິນຄໍ້າປະກັນ ທີ່ວາງໄວ້ຢູ່ທະນາຄານ ຄືນໃຫ້ແກ່ບໍລິສັດ ບໍ່ໃຫ້ເກີນ 30 ວັນນັບແຕ່ມື້ທີ່ລັດຖະມົນຕີກະຊວງເສດຖະກິດແຜນການ ແລະ ການເງິນໄດ້ອອກໃບແຈ້ງການເປັນຕົ້ນໄປ. ໃນໃບແຈ້ງການນັ້ນ ຕ້ອງໃຫ້ບອກການປະຕິບັດພັນທະ ທີ່ເປັນຂອງບໍລິສັດ ຫລື ການໂອນຊັບສິນບັດທີ່ມີ ແລະ ພັນທະຕ່າງໆ ໃຫ້ວິສາຫະກິດໃດໜຶ່ງທີ່ໄດ້ຮັບອະນຸຍາດໃຫ້ສ້າງຕັ້ງ.

### ມາດຕາ 19. ວິທີການປັບປຸງປະສິດທິຜົນ ຂອງວິສາຫະກິດປະກັນໄພ

**ໃນກໍລະນີທີ່ເຫັນວ່າ ວິສາຫະກິດປະກັນໄພ ຫາກຢູ່ໃນສະພາບທີ່ຈະບໍ່ມີການຮັບປະກັນ ພຽງພໍເພື່ອປະຕິບັດພັນທະຂອງຕົນ ຫລື ອາດຈະບໍ່ສາມາດດໍາເນີນໜ້າທີ່ໄປໄດ້ຕາມລະບຽບຫລັກການແລ້ວ ລັດຖະມົນຕີກະຊວງເສດຖະກິດແຜນການ ແລະ ການເງິນມີສິດໃຫ້ຄໍາສັ່ງແນະນໍາ ແລະ ທວງໃຫ້ວິສາຫະກິດປະກັນໄພທີ່ກ່ຽວຂ້ອງ ຕ້ອງນໍາສະເໜີແຜນການປັບປຸງ ວິສາຫະກິດຄືນໃໝ່ ເພື່ອຂໍອະນຸມັດ. ໃນແຜນການນັ້ນ ຕ້ອງຄາດຄະເນທຸກມາດຕະການສະເພາະ ເພື່ອປັບປຸງຄວາມດຸ່ນດ່ຽງ ຂອງວິສາຫະກິດໃຫ້ມີປະສິດທິຜົນດີຂຶ້ນ.**

ການສະເໜີແຜນການປັບປຸງ ວິສາຫະກິດນັ້ນ ຕ້ອງນໍາສະເໜີພາຍໃນກໍານົດ 30 ວັນ ນັບແຕ່ມື້ໄດ້ຮັບຄໍາສັ່ງແນະນໍາ ເປັນຕົ້ນໄປ.

ຖ້າວ່າວິສາຫະກິດປະກັນໄພໃດ ຫາກໄດ້ລະເມີດລະບຽບການ ກ່ຽວກັບຄັງແຮດ້ານວິຊາການແລ້ວ ລັດຖະມົນຕີກະຊວງເສດຖະກິດແຜນການ ແລະ ການເງິນມີສິດສັ່ງງົດການນໍາໃຊ້ ຢ່າງເສລີຊັບສິນຂອງວິສາຫະກິດປະກັນໄພທີ່ກ່ຽວຂ້ອງ ຊຶ່ງຕັ້ງຢູ່ໃນດິນແດນຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

## ມາດຕາ 20. ການໂອນຄັງສັນຍາປະກັນໄພ

**ວິສາຫະກິດປະກັນໄພມີສິດໂອນຄັງສັນຍາປະກັນໄພທັງຫມົດ ຫລື ສ່ວນໃດສ່ວນຫນຶ່ງ, ພ້ອມທັງສິດ ແລະ ພັນທະຂອງຕົນໃຫ້ແກ່ວິສາຫະກິດປະກັນໄພອື່ນໃດຫນຶ່ງ ຫລື ຫລາຍວິສາຫະກິດກໍໄດ້ແຕ່ຕ້ອງໄດ້ຮັບອະນຸຍາດຈາກລັດຖະມົນຕີກະຊວງເສດຖະກິດແຜນການ ແລະ ການເງິນເສຍກ່ອນ.**

**ຄຳຮ້ອງຂໍໂອນຄັງສັນຍາດັ່ງກ່າວ ຕ້ອງແຈ້ງໃຫ້ບັນດາເຈົ້າຫນີ້ຊາບດ້ວຍ ໃບແຈ້ງການທີ່ປະກາດເຜີຍແຜ່ ເພື່ອໃຫ້ພວກກ່ຽວສະເຫນີຄຳຄິດຄຳເຫັນພາຍໃນ ກຳນົດ 3 ເດືອນ. ໃນກໍລະນີທີ່ເຫັນວ່າການໂອນຄັງສັນຍາປະກັນໄພນັ້ນ ທາກສອດຄ່ອງກັບສິດຜົນປະໂຫຍດ ຂອງຜູ້ໄດ້ຮັບການປະກັນໄພ ແລະ ບັນດາເຈົ້າຫນີ້ທີ່ເປັນຄົນລາວແລ້ວ ລັດຖະມົນຕີກະຊວງເສດຖະກິດແຜນການ ແລະ ການເງິນ ກໍຈະອອກຄຳຕົກລົງໂອນຕາມຄຳຮ້ອງຂໍ.**

## ມາດຕາ 21. ການຖອນອະນຸຍາດ

ການອະນຸຍາດໃຫ້ດຳເນີນທຸລະກິດປະກັນໄພ ທີ່ໄດ້ຕົກລົງໃຫ້ວິສາຫະກິດປະກັນໄພນັ້ນ ອາດຈະຖອນຄືນບາງຂະແຫນງປະກັນໄພ ຫລື ທັງຫມົດກໍ່ໄດ້ໃນທຸກເວລາ ຖ້າຫາກເຫັນວ່າວິສາຫະກິດນັ້ນ:

ປະຕິບັດຕາມເງື່ອນໄຂທີ່ໄດ້ກຳນົດໄວ້ນັ້ນບໍ່ໄດ້;

ຫລື ບໍ່ສາມາດຈະປະຕິບັດມາດຕະການຕ່າງໆ ທີ່ໄດ້ກຳນົດໄວ້ໃນແຜນປັບປຸງປະສິດທິຜົນຂອງວິສາຫະກິດໄດ້ ຕາມກຳນົດເວລາ;

ຫລື ລະເມີດລະບຽບການຢ່າງຮ້າຍແຮງກ່ຽວກັບການປະຕິບັດພັນທະຕ່າງໆ ທີ່ຍັງມີຜົນສັກສິດຢູ່;

ໃນກໍລະນີທີ່ໄດ້ມີການຖອນອະນຸຍາດຈາກວິສາຫະກິດປະກັນໄພຕ່າງປະເທດ ໂດຍອີງການທີ່ມີສິດອຳນາດກວດກາຂອງສຳນັກງານໃຫຍ່ ວິສາຫະກິດຂອງເຂົາເຈົ້າແລ້ວ ລັດຖະມົນຕີກະຊວງເສດຖະກິດແຜນການ ແລະ ການເງິນ ຕ້ອງໄດ້ຖອນອະນຸຍາດ ທີ່ໄດ້ອອກໃຫ້ສາຂາວິສາຫະກິດດັ່ງກ່າວ ທີ່ຕັ້ງຢູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວນັ້ນຄືນ.

ທຸກການຕົກລົງຖອນອະນຸຍາດທາງການຄືນ ຫລື ໂຈະການເຄື່ອນໄຫວນັ້ນ ຕ້ອງໃຫ້ເຫດຜົນຢ່າງຊັດເຈນ ແລະ ແຈ້ງໃຫ້ວິສາຫະກິດທີ່ກ່ຽວຂ້ອງຊາບ.

ການຖອນອະນຸຍາດນັ້ນ ລັດຖະມົນຕີກະຊວງເສດຖະກິດແຜນການ ແລະ ການເງິນ ຕ້ອງເຮັດເປັນຄຳຕົກລົງ ແລະ ທຳການເຜີຍແຜ່.

## ມ າດຕາ 22. ການຂໍລົບລ້າງຄຳຕົກລົງຖອນອະນຸຍາດ

**ວິສາຫະກິດປະກັນໄພ ມີສິດຂໍລົບລ້າງຄຳຕົກລົງຖອນອະນຸຍາດ ດຳເນີນທຸລະກິດປະກັນໄພຂອງລັດຖະມົນຕີກະຊວງເສດຖະກິດແຜນການ ແລະ ການເງິນ ຕໍ່ສະພາລັດຖະມົນຕີໄດ້ພາຍໃນກຳນົດສິບຫ້າວັນ ນັບແຕ່ມື້ທີ່ໄດ້ຮັບຊາບຄຳຕົກລົງ ຖອນອະນຸຍາດ ເປັນຕົ້ນໄປ.**

ສະພາລັດຖະມົນຕີ ຕ້ອງຄົ້ນຄ້ວາພິຈາລະນາລົງຄວາມເຫັນຕໍ່ຄໍາຮ້ອງຂໍດັ່ງກ່າວ ຢ່າງຊ້າບໍ່ໃຫ້ເກີນສາມສິບວັນ ນັບແຕ່ມື້ໄດ້ຮັບຄໍາຮ້ອງຂໍລົບລ້າງເປັນຕົ້ນໄປ.

### ມາດຕາ 23. ການຊໍາລະສະສາງ

ຄໍາຕົກລົງຖອນອະນຸຍາດທັງໝົດກ່ຽວກັບການດໍາເນີນທຸລະກິດປະກັນໄພ ຂອງລັດຖະມົນຕີກະຊວງເສດຖະກິດແຜນການ ແລະ ການເງິນມີ ຜົນບັງຄັບໃຫ້ຍຸບເລີກ ບໍລິສັດປະກັນໄພຂອງລາວ ທີ່ກ່ຽວຂ້ອງ ຫລືໃຫ້ເລີ່ມຕົ້ນຈັດຕັ້ງການຊໍາລະສະສາງຊັບສິນ ແລະ ໜີ້ສິນ ຂອງສາຂາບໍລິສັດປະກັນໄພຕ່າງປະເທດ ນັບແຕ່ມື້ຄໍາຕົກລົງມີຜົນສັກສິດເປັນຕົ້ນໄປ.

ໃນກໍລະນີທີ່ວິສາຫະກິດ ຫາກໄດ້ມີຄໍາຮ້ອງຂໍລົບລ້າງຄໍາຕົກລົງຖອນອະນຸຍາດນັ້ນ ກໍໃຫ້ນັບແຕ່ມື້ອອກດໍາລັດ ຂອງສະພາລັດຖະມົນຕີເປັນຕົ້ນໄປ.

### ມາດຕາ 24. ການຈັດຕັ້ງຊໍາລະສະສາງ

ການຊໍາລະສະສາງ ແມ່ນດໍາເນີນໂດຍຄະນະກໍາມະການຊໍາລະສະສາງ ຊຶ່ງຖືກແຕ່ງຕັ້ງໂດຍປະທານສະພາລັດຖະມົນຕີ ຕາມການສະເໜີ ຂອງລັດຖະມົນຕີກະຊວງເສດຖະກິດແຜນການ ແລະ ການເງິນ.

ໃນຄະນະກໍາມະການຊໍາລະສະສາງນັ້ນ ໃຫ້ມີຜູ້ຕາງໜ້າກົມປະກັນໄພໜຶ່ງ ຫລື ຫລາຍຄົນ ແລະ ນັກວິຊາການອື່ນໆທີ່ເຫັນວ່າມີຄວາມຈໍາເປັນ.

ໃນການດໍາເນີນການຊໍາລະສະສາງນັ້ນການແບ່ງປັນ ຕ້ອງປະຕິບັດຕາມບຸລິມະສິດ ຂອງເຈົ້າໜີ້ ແລະ ຕາມກົດໝາຍແພ່ງໄດ້ກໍານົດໄວ້.

## ໝວດ ທີ 2 ຄົນກາງປະກັນໄພ

### ມາດຕາ 25. ການສະເໜີການປະກັນໄພ

ການທີ່ບຸກຄົນ ຫລື ນິຕິບຸກຄົນໃດໜຶ່ງຫາກໄດ້ສະເໜີ ຫລື ຮັບເອົາການສະເໜີເຊັນສັນຍາປະກັນໄພ ຫລື ໄດ້ອະທິບາຍເງື່ອນໄຂຂອງການຄໍ້າປະກັນໂດຍປາກເປົ່າ ຫລື ເປັນລາຍລັກອັກສອນ ໃຫ້ຜູ້ທີ່ຈະເຊັນເອົາການປະກັນໄພນັ້ນ ກໍໃຫ້ຖືວ່າເປັນການສະເໜີປະກັນໄພ.

### ມາດຕາ 26. ຄົນກາງປະກັນໄພ

ທຸລະກິດປະກັນໄພທຸກຂະແໜງ ຈະສະເໜີຕໍ່ມວນຊົນໄດ້ ກໍຕໍ່ເມື່ອຫາກໄດ້ຜ່ານຄົນກາງປະກັນໄພດັ່ງຕໍ່ໄປນີ້:

1. ຕົວແທນປະກັນໄພ;

2. ນາຍຫນ້າປະກັນໄພ ແລະ ວິສາຫະກິດນາຍຫນ້າປະກັນໄພ ທີ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງຕາມກົດໝາຍ;

3. ພະນັກງານຂອງບໍລິສັດປະກັນໄພ, ຜູ້ໄດ້ຮັບມອບສິດຈາກບໍລິສັດປະກັນໄພ, ພະນັກງານຂອງຕົວແທນປະກັນໄພ ແລະ ຂອງນາຍຫນ້າປະກັນໄພ ຫລື ຂອງວິສາຫະກິດ ນາຍຫນ້າປະກັນໄພທີ່ໄດ້ຮັບມອບຫມາຍວຽກງານນີ້ຢ່າງຖືກຕ້ອງ ແລະ ໄດ້ປະຕິບັດວຽກນີ້ ພາຍໃຕ້ຄວາມຮັບຜິດຊອບ ແລະ ເພື່ອຜົນປະໂຫຍດ ຂອງຜູ້ມອບຫມາຍ ຫລື ຂອງບໍລິສັດ.

ບໍລິສັດປະກັນໄພ, ຕົວແທນປະກັນໄພ, ນາຍໜ້າ ຫລື ວິສາຫະກິດນາຍຫນ້າປະກັນໄພ ຕ້ອງຮັບຜິດຊອບທາງແພ່ງຕໍ່ການເສຍຫາຍ ທີ່ໄດ້ເກີດຂຶ້ນຍ້ອນຄວາມຜິດ, ຄວາມບໍ່ຮອບຄອບ ຫລື ການບໍ່ເອົາໃຈໃສ່ ຂອງພະນັກງານຂອງຕົນ ຫລື ຜູ້ທີ່ໄດ້ຮັບມອບຫມາຍ.

### ມາດຕາ 27. ມາດຕະຖານດ້ານວິຊາຊີບ

**ບຸກຄົນທີ່ຈະປະກອບອາຊີບ ເປັນຄົນກາງປະກັນໄພ ຕາມທີ່ໄດ້ກ່າວໄວ້ໃນມາດຕາ 26 ເທິງນີ້ຕ້ອງປະກອບດ້ວຍມາດຕະຖານດັ່ງນີ້ :**

1. ມີອາຍຸບໍ່ຕ່ຳກວ່າ 18 ປີ ແລະ ແມ່ນສັນຊາດລາວ;
2. ບໍ່ມີຄວາມຜິດໃນຂໍ້ໃດຂໍ້ຫນຶ່ງ ທີ່ໄດ້ບົ່ງໄວ້ໃນມາດຕາ 14 ຂອງກົດຫມາຍສະບັບນີ້;
3. ມີຄວາມຮູ້, ຄວາມສາມາດດ້ານວິຊາຊີບນີ້ໃນລະດັບອັນແນ່ນອນ.

## ຫມວດ ທີ 3 ລະບອບການເງິນ

### ມາດຕາ 28. ພັນທະຜູກພັນຕາມລະບຽບການ

ພັນທະຜູກພັນຕາມລະບຽບການ ຊຶ່ງວິສາຫະກິດປະກັນໄພ ຕ້ອງມີຫລັກຖານຢັ້ງຢືນ ກ່ຽວກັບການປະເມີນມູນຄ່າໃນທຸກເວລາ ມີດັ່ງຕໍ່ໄປນີ້:

1. ຄັງແຮດ້ານວິຊາການຕ້ອງໃຫ້ມີພຽງພໍ ເພື່ອປະຕິບັດພັນທະຜູກພັນຢ່າງຄົບຖ້ວນຕໍ່ຜູ້ໄດ້ຮັບການປະກັນໄພ ຫລື ຜູ້ໄດ້ຮັບຜົນປະໂຫຍດຈາກສັນຍາປະກັນໄພ;
2. ລາຍການຫນີ້ສິນຕ້ອງກົງກັບຈຳນວນຫນີ້ອື່ນໆ ທີ່ມີບຸລິມະສິດ.

### ມາດຕາ 29. ຄັງແຮປະກັນໄພຊີວິດຂອງຄົນ ແລະ ລະດົມການສະສົມທຶນ

**ຄັງແຮດ້ານວິຊາການ ກ່ຽວກັບການດຳເນີນກິດຈະການປະກັນໄພຊີວິດຂອງຄົນ ແລະ ລະດົມການສະສົມທຶນ ມີດັ່ງຕໍ່ໄປນີ້:**

**1. ຄັງແຮຕາມຫລັກສູດຄິດໄລ່ ແມ່ນຮ່ອງຜິດດ່ຽງລະຫວ່າງມູນຄ່າປະຈຸບັນ ຂອງພັນທະຜູກພັນຂອງວິສາຫະກິດປະກັນໄພ ກັບຂອງຜູ້ໄດ້ຮັບການປະກັນໄພ ທີ່ໄດ້ຕົກລົງຮັບເອົານຳກັນ ( ແບບວິທີການຄິດໄລ່ ຕ້ອງອີງໃສ່ຕາຕະລາງອັດຕາການເສຍຊີວິດ ແລະ ອັດຕາດອກເບ້ຍ);**

2. ຄັງແຮເພື່ອການແບ່ງປັນກຳໄລສ່ວນເກີນ.

## ມາດຕາ 30. ຄັງແຮປະກັນໄພການເສຍຫາຍ

**ຄັງແຮດ້ານວິຊາການ ທີ່ກ່ຽວກັບກິດຈະການປະກັນໄພ ການເສຍຫາຍຕ່າງໆມີດັ່ງນີ້:**

1. ຄັງແຮສຳລັບການສ່ຽງໄພ ທີ່ພວມປະຕິບັດຢູ່ແມ່ນຄັງແຮສຳລັບຮັບປະກັນການສ່ຽງໄພ, ຄ່າໃຊ້ຈ່າຍທົ່ວໄປ ທີ່ກ່ຽວຂ້ອງສຳລັບສັນຍາ ແຕ່ລະສະບັບທີ່ໄດ້ຈ່າຍຄ່າທຳນຽມປະກັນໄພລ່ວງໜ້າແລ້ວ ໃນຊ່ວງເວລາລະຫວ່າງມື້ທີ່ຂຶ້ນບັນຊີ ແລະ ມື້ທີ່ໄດ້ກຳນົດຄ່າທຳນຽມປະກັນໄພເທື່ອໃຫມ່;

2. ຄັງແຮສຳລັບການເສຍຫາຍທີ່ຍັງຄ້າງຈ່າຍ ແມ່ນມູນຄ່າປະເມີນລາຍຈ່າຍ ທີ່ຍັງບໍ່ທັນໄດ້ປະຕິບັດ;

3. ຄັງແຮສຳລັບການສ່ຽງໄພເພີ່ມຂຶ້ນ ແລະ ຄັງແຮເພື່ອການສົມດຸນການສ່ຽງໄພ.

## ມາດຕາ 31. ບຸລິມະສິດຂອງຜູ້ໄດ້ຮັບການປະກັນໄພ ແລະ ຜູ້ທີ່ໄດ້ຮັບຜົນປະໂຫຍດຈາກສັນຍາ

**ຊັບເຄື່ອນທີ່ ຂອງວິສາຫະກິດປະກັນໄພ ຊຶ່ງປະກອບຢູ່ໃນຄັງແຮດ້ານວິຊາການນັ້ນ ເປັນບຸລິມະສິດພິເສດ ຂອງຜູ້ໄດ້ຮັບການປະກັນໄພ ແລະ ຜູ້ໄດ້ຮັບຜົນປະໂຫຍດ ຈາກສັນຍາປະກັນໄພ. ບຸລິມະສິດນັ້ນໃຫ້ຈັດຢູ່ໃນອັນ ດັບ ຖັດຈາກເງິນເດືອນ ຂອງພະນັກງານ ແລະ ໜີ້ສິນຂອງລັດ.**

ຊັບຄົງທີ່ ຂອງວິສາຫະກິດປະກັນໄພ ທີ່ປະກອບເຂົ້າເປັນຄັງແຮດ້ານວິຊາການ ຕາມການສະເຫນີ ຂອງລັດຖະມົນຕີກະຊວງເສດຖະກິດແຜນການ ແລະ ການເງິນນັ້ນ ເປັນຫລັກຊັບຂອງການຄ້ຳປະກັນ ຊຶ່ງຈະຕ້ອງຮັບປະກັນ ໃຫ້ແກ່ເຈົ້າຫນີ້ບຸລິມະສິດ ແລະ ຈະຕ້ອງໄດ້ຂຶ້ນທະບຽນຢ່າງຖືກຕ້ອງຕາມກົດຫມາຍ.

## ມາດຕາ 32. ຄວາມສາມາດໃນການໃຊ້ໜີ້ສິນ

**ທຸກວິສາຫະກິດປະກັນໄພ ຕ້ອງມີຫລັກຖານຢັ້ງຢືນ ຄວາມສາມາດພຽງພໍຂອງຕົນ ໃນ ການໃຊ້ຫນີ້ສິນ.**

ຄວາມສາມາດໃນການໃຊ້ໜີ້ສິນປະກອບດ້ວຍ:

1. ທຶນວິສາຫະກິດ ຫລື ທຶນສ້າງຕັ້ງ;

2. ທຶນສຳຮອງທີ່ບໍ່ກ່ຽວກັບການປະຕິບັດພັນທະໃດໆ;

3. ກຳໄລທີ່ຍົກຍອດມາ ແລະ ຜົນທີ່ໄດ້ຮັບ ຂອງປີດຳເນີນວຽກງານພາຍຫລັງ ທີ່ໄດ້ຫັກການຂາດທຶນອອກແລ້ວ;

4. ມູນຄ່າສ່ວນເກີນທີ່ເນື່ອງມາຈາກການປະເມີນລາຄາ ຂອງອົງປະກອບຊັບສິນຕ່ຳ ຕາມການຕົກລົງເຫັນດີ ຂອງລັດຖະມົນຕີກະຊວງ ເສດຖະກິດແຜນການ ແລະ ການເງິນ ໂດຍອີງໃສ່ການສະເຫນີ ແລະ ການຢັ້ງຢືນຫລັກຖານ ຂອງວິສາຫະກິດປະກັນໄພ;

5. ຊັບສິນທີ່ບໍ່ມີຕົວຕົນ ແມ່ນບໍ່ໃຫ້ຄິດໄລ່ເຂົ້າໃນຄວາມສາມາດໃນການໃຊ້ໜີ້ສິນ.

ຈຳນວນເງິນ ທີ່ສາມາດໄຊ້ຫນີ້ສິນ ຕ້ອງເທົ່າກັບຊາວສ່ວນຮ້ອຍ ຂອງຄ່າທຳນຽມປະກັນໄພຕົວຈິງ.

## ໝວດ ທີ 4 ການບັນຊີ ແລະ ສະຖິຕິ

### ມາດຕາ 33. ເຈົ້າຫນ້າທີ່ກວດສອບການບັນຊີ

ວິສາຫະກິດປະກັນໄພ ຕ້ອງຢູ່ພາຍໃຕ້ການກວດກາ ຂອງເຈົ້າຫນ້າທີ່ກວດສອບການບັນຊີຜູ້ຫນຶ່ງ ຫລື ຫລາຍຄົນ.

### ມາດຕາ 34. ແຜນບັນຊີສະເພາະ

ທຸກວິສາຫະກິດປະກັນໄພ ຕ້ອງຖືບັນຊີຂອງຕົນຕາມຮູບແບບ ທີ່ໄດ້ບົ່ງໄວ້ໃນກົດຫມາຍການບັນ ຊີ ວິສາຫະກິດ.

ການບັນຊີຕ້ອງເຮັດແຕ່ລະປີດຳເນີນງານ ແລະ ແຕ່ລະຂະແຫນງປະກັນໄພ. ການຂຶ້ນບັນຊີວິສາຫະກິດປະກັນໄພຕ້ອງມີການຢັ້ງຢືນດ້ວຍເອກະສານ ແລະ ໃບສະຫລຸບການກວດກາຊັບສິນບັດປະຈຳປີ. ເພື່ອເປັນບ່ອນອີງໃຫ້ແກ່ການຂຶ້ນບັນຊີຊັບສິນບັດປະຈຳປີນັ້ນ ຕ້ອງເຮັດໃບດຸນດ່ຽງຂອງທຸກບັນຊີ ແລະ ບັນຊີຍ່ອຍ. ໃບດຸນດ່ຽງດັ່ງກ່າວ ຕ້ອງມີຄວາມສາມາດກວດກາສັງລວມ ການຈິດກ່າຍທັງຫມົດ ທີ່ສະແດງອອກຢູ່ໃນປຶ້ມບັນຊີໃຫຍ່ທົ່ວໄປ.

### ມາດຕາ 35. ການລາຍງານການບັນຊີ

ໃນແຕ່ລະປີ, ວິສາຫະກິດປະກັນໄພຕ້ອງເຮັດບົດລາຍງານປະຈຳປີຂອງປີຜ່ານມາ ແລ້ວສົ່ງໃຫ້ລັດຖະມົນຕີກະຊວງເສດຖະກິດແຜນການ ແລະ ການເງິນ ຢ່າງຊ້າບໍ່ໃຫ້ກາຍວັນທີ ສາມສິບ ເດືອນ ມິຖຸນາ. ໃນບົດລາຍງານຕ້ອງແຈ້ງລະອຽດກ່ຽວກັບການດຳເນີນທຸລະກິດຂອງຕົນ ພ້ອມດ້ວຍຖານະການບັນຊີແຕ່ລະຂະແຫນງປະກັນໄພ ເພື່ອໃຫ້ມີຄວາມສາມາດ ກວດກາສະພາບການດຳເນີນງານ ຂອງວິສາຫະກິດ.

### ມາດຕາ 36. ປຶ້ມບັນຊີຕ່າງໆ ຂອງວິສາຫະກິດປະກັນໄພ

ວິສາຫະກິດປະກັນໄພ ຕ້ອງມີປຶ້ມບັນຊີຕ່າງໆດັ່ງຕໍ່ໄປນີ້:

1. ປຶ້ມໃຫຍ່ບັນທຶກປະຈຳວັນຫຍິບເປັນເຫລັ້ມ ຕາມລຳດັບວັນທີ, ບໍ່ປະຫວ່າງຂາວ, ບໍ່ໃຫ້ມີຊ່ອງຫວ່າງ, ບໍ່ໃຫ້ຂຽນລໍ້ຫນ້າອອກມານອກແຖວ ຈຳນວນຫນຶ່ງຫົວ;
2. ປຶ້ມບັນຊີໃຫຍ່ທົ່ວໄປ ຫນຶ່ງຫົວ;
3. ປຶ້ມໃບດຸ່ນດ່ຽງປະຈຳໄຕມາດ ຫນຶ່ງຫົວ;
4. ປຶ້ມຂຶ້ນບັນຊີ ຊັບສິນບັດປະຈຳປີ ຫຍິບຕິດກັນ ຫນຶ່ງຫົວ;

5. ປື້ມຕິດຕາມຄັງເງິນສົດ ໜຶ່ງ ຫລື ຫລາຍຫົວ;

6. ປື້ມຕິດຕາມເງິນຝາກທະນາຄານ ໜຶ່ງຫົວ.

ໃບຢັ້ງຢືນຊັບເຄື່ອນທີ່, ຊັບຄົງທີ່ ແລະ ການກູ້ຢືມຕ້ອງຂຶ້ນບັນຊີຕິດຕາມຢ່າງເປັນປະຈໍາ ໂດຍຖືບັນຊີຕິດຕາມ ສະເພາະຂອງໃຜມັນ ແລະ ປື້ມບັນທຶກການເຄື່ອນໄຫວ.

## ພາກ ທີ IV ລະບຽບການກ່ຽວກັບສັນຍາປະກັນໄພ

## ໝວດ ທີ 1 ເປົ້າໝາຍການປະຕິບັດສັນຍາປະກັນໄພ ແລະ ລະບຽບການກ່ຽວກັບການເຮັດໃບປະກັນໄພ

### ມາດຕາ 37. ເປົ້າໝາຍການປະຕິບັດສັນຍາປະກັນໄພ

ສັນຍາປະກັນໄພກ່ຽວກັບຕົວບຸກຄົນທີ່ຢູ່ ຫລື ອາໃສຢູ່, ການສ່ຽງໄພທີ່ເກີດຂຶ້ນ ແລະ ຊັບສົມບັດທີ່ຕັ້ງ ຫລື ຂຶ້ນທະບຽນຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈະເຮັດຂຶ້ນໄດ້ແຕ່ສະເພາະກັບບໍລິສັດທີ່ໄດ້ຮັບອະນຸຍາດໃຫ້ດໍາເນີນທຸລະກິດ ປະກັນໄພຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລ້ວເທົ່ານັ້ນ.

ທຸກສັນຍາປະກັນໄພ ທີ່ໄດ້ເຮັດຂຶ້ນໂດຍລະເມີດບົດບັນຍັດຂອງມາດຕານີ້ ຈະຖືວ່າເປັນໂມຄະ ແລະ ບໍ່ມີຜົນບັງຄັບໃຊ້. ແຕ່ສໍາລັບຜູ້ໄດ້ຮັບການປະກັນໄພ ແລະ ຜູ້ໄດ້ຮັບຜົນປະໂຫຍດໂດຍມີຄວາມຈິງໃຈນັ້ນສັນຍານີ້ກໍຍັງມີຜົນໃຊ້ໄດ້ຢູ່.

### ມາດຕາ 38. ການເຮັດໃບປະກັນໄພ

ຄໍາສະເໜີປະກັນໄພ ຍັງບໍ່ທັນແມ່ນການຜູກມັດ ລະຫວ່າງຜູ້ໄດ້ຮັບການປະກັນໄພ ແລະ ຜູ້ປະກັນໄພ. ມີແຕ່ໃບປະກັນໄພ ຫລື ບັນທຶກການຄຸ້ມກັນເທົ່ານັ້ນ ຈຶ່ງເຮັດໃຫ້ຜູ້ໄດ້ຮັບການປະກັນໄພ ແລະ ຜູ້ປະກັນໄພມີພັນທະຜູກພັນຕໍ່ກັນ.

ໃບປະກັນໄພແມ່ນເອກະສານ ທີ່ກໍານົດເງື່ອນໄຂທົ່ວໄປ ຂອງສັນຍາປະກັນໄພ, ສັນຍາປະກັນໄພຈະມີຜົນບັງຄັບໃຊ້ໄດ້ ກໍຕໍ່ເມື່ອຫາກໄດ້ມີການຕົກລົງຮັບເອົາບັນດາເງື່ອນໄຂທົ່ວໄປ ຂອງຄູ່ສັນຍາໂດຍມີໃບປະກັນໄພເປັນຫລັກຖານຢັ້ງຢືນ ແລະ ອອກໃຫ້ໂດຍບໍລິສັດປະກັນໄພ.

ໃບປະກັນໄພຕ້ອງເຮັດເປັນລາຍລັກອັກສອນ ທີ່ອ່ານໄດ້ງ່າຍ ແລະ ເປັນພາສາລາວ. ໃນກໍລະນີທີ່ຈໍາເປັນ ອາດຈະເຮັດເປັນພາສາຕ່າງປະເທດຕື່ມອີກກໍໄດ້.

ການເພີ່ມເຕີມ ຫລື ການປ່ຽນແປງຂໍ້ຄວາມໃນໃບປະກັນໄພ ທີ່ໄດ້ເຮັດນໍາກັນມາແລ້ວ ໃນເບື້ອງຕົ້ນນັ້ນ ຄູ່ສັນຍາຕ້ອງເຮັດເປັນສັນຍາເພີ່ມເຕີມອີກ.

ສໍາລັບສັນຍາປະກັນໄພ ທີ່ໄດ້ໂຈະໄວ້ຕາມມາດຕາ 43 ຂອງກົດໝາຍສະບັບນີ້ ໃນເມື່ອມີຄໍາສະເໜີເພື່ອສືບຕໍ່, ປ່ຽນແປງ ຫລື ປະຕິບັດຄືນໃໝ່ ຊຶ່ງໄດ້ສົ່ງໃຫ້ຜູ້ປະກັນໄພໂດຍທາງຈົດໝາຍຂຶ້ນທະບຽນໄປສະນີ ຫຼືທາງຈົດໝາຍສົ່ງໃຫ້ເຊັນຮັບເອົານັ້ນ ຖ້າວ່າຜູ້ປະກັນໄພຫາກບໍ່ໄດ້ປະຕິເສດຄໍາສະເໜີ

**ດັ່ງກ່າວພາຍໃນກຳນົດ 15 ວັນ ນັບແຕ່ມື້ໄດ້ຮັບການສະເໜີນັ້ນເປັນຕົ້ນໄປ ກໍຈະຖືວ່າໄດ້ມີການຮັບຮອງເອົາແລ້ວ.**

**ນອກຈາກລະບຽບການນີ້ແລ້ວ ການເຮັດສັນຍາປະກັນໄພ ກໍຍັງຈະຕ້ອງປະຕິບັດຕາມມາດຕາ 5 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ.**

### ມາດຕາ 39. ກຳນົດເວລາຂອງໃບປະກັນໄພ

**ໃບປະກັນໄພຕ້ອງໄດ້ວາງກຳນົດເວລາໄວ້. ສັນຍາປະກັນໄພທີ່ໄດ້ສະເໜີໂດຍບໍລິສັດປະກັນໄພຕາມທີ່ໄດ້ບົ່ງໄວ້ໃນຂໍ້ 2 ມາດຕາ 4 ຂອງກົດໝາຍສະບັບນີ້ ໃຫ້ເຮັດໄດ້ໃນກຳນົດ ໜຶ່ງປີ ແລະ ການຕໍ່ສັນຍານີ້ ແຕ່ລະເທື່ອກໍບໍ່ໃຫ້ເກີນໜຶ່ງປີ.**

ໃນກໍລະນີ ທີ່ສັນຍາປະກັນໄພໄດ້ໝົດກຳນົດແລ້ວ ແຕ່ຫາກມີການສືບຕໍ່ແບບໃນຕົວມັນເອງນັ້ນ ຄູ່ສັນຍາຝ່າຍໃດຝ່າຍໜຶ່ງ ຈະຍົກເລີກສັນຍານັ້ນກໍໄດ້ ແຕ່ຕ້ອງແຈ້ງໃຫ້ອີກຝ່າຍໜຶ່ງຊາບລ່ວງໜ້າ 3 ເດືອນ ໂດຍເຮັດເປັນລາຍລັກອັກສອນ ຫຼື ທາງຈົດໝາຍຂຶ້ນທະບຽນໄປສະນີ ຫຼື ທາງຈົດໝາຍທີ່ໄດ້ສົ່ງໃຫ້ເຊັນຮັບເອົາ.

### ມາດຕາ 40. ເນື້ອໃນຕົ້ນຕໍຂອງໃບປະກັນໄພ

**ເນື້ອໃນຕົ້ນຕໍຂອງໃບປະກັນໄພປະກອບດ້ວຍ:**

1. ຊື່ ແລະ ນາມສະກຸນ, ທີ່ຢູ່ຂອງຄູ່ສັນຍາ;
2. ຕົວບຸກຄົນ ຫຼື ຊັບສິນບັດທີ່ເອົາມາປະກັນໄພ;
3. ປະເພດການສ່ຽງໄພທີ່ຮັບປະກັນ;
4. ເວລາເລີ່ມຕົ້ນຮັບປະກັນການສ່ຽງໄພ;
5. ຈຳນວນເງິນທີ່ຮັບປະກັນ;
6. ຄ່າທຳນຽມປະກັນໄພ ແລະ ວິທີການຈ່າຍ;
7. ວິທີການ ແລະ ເງື່ອນໄຂ ໃນການແຈ້ງກ່ຽວກັບ ການເສຍຫາຍທີ່ໄດ້ເກີດຂຶ້ນ;
8. ກຳນົດເວລາຂອງສັນຍາປະກັນໄພ ແລະ ຂອງການຄ້ຳປະກັນ;
9. ຂໍ້ຄວາມທີ່ບົ່ງບອກເຖິງການເປັນໂມຄະ ຂອງສັນຍາປະກັນໄພ, ການເສຍສິດ ແລະ ການໃຫ້ສິດ ແກ່ຄູ່ສັນຍາແຕ່ລະຝ່າຍ ຍຸດເຊົາສັນຍາປະກັນໄພ ກ່ອນວັນທີ່ຈະສິ້ນສຸດກຳນົດ.

### ມາດຕາ 41. ການສ່ຽງໄພທີ່ມີການຄຸ້ມກັນ

**ຜູ້ປະກັນໄພຕ້ອງຮັບຜິດຊອບຕໍ່ການສູນເສຍ ຫຼືການເສຍຫາຍທີ່ໄດ້ເກີດຂຶ້ນແກ່ເປົ້າໝາຍປະກັນໄພ ຍ້ອນເຫດບັງເອີນ ຫຼື ຍ້ອນຄວາມຜິດຂອງຜູ້ໄດ້ຮັບການປະກັນໄພ, ເວັ້ນເສຍແຕ່ໃບປະກັນໄພນັ້ນຫາກໄດ້ກຳນົດໄວ້ຢ່າງອື່ນ.ຜູ້ປະກັນໄພຈະບໍ່ຮັບຜິດຊອບຕໍ່ການສູນເສຍ ຫຼື ການເສຍຫາຍ ຊຶ່ງຜູ້ໄດ້ຮັບການປະກັນໄພໄດ້ກໍ່ຂຶ້ນໂດຍເຈດຕະນາ.**

ຜູ້ປະກັນໄພຕ້ອງໄດ້ຮັບຜິດຊອບຕໍ່ການສູນເສຍ ຫຼື ການເສຍຫາຍ ຊຶ່ງຜູ້ໄດ້ຮັບການປະກັນໄພເປັນຜູ້ຮັບຜິດຊອບທາງແພ່ງແທນນັ້ນ ໄດ້ກໍ່ຂຶ້ນເຖິງວ່າຄວາມຜິດດັ່ງກ່າວ ຈະມີລັກສະນະ ແລະ ລະດັບຮ້າຍແຮງຢ່າງໃດກໍຕາມ.

## ມາດຕາ 42. ພັນທະຂອງຜູ້ໄດ້ຮັບການປະກັນໄພ

**ຜູ້ໄດ້ຮັບການປະກັນໄພມີພັນທະ:**

1. ຈ່າຍຄ່າທໍານຽມປະກັນໄພ;

2. ແຈ້ງທຸກໆສະພາບການທີ່ຕົນເອງໄດ້ຮູ້ຢ່າງຖືກຕ້ອງ ເພື່ອຊ່ວຍປະເມີນການສ່ຽງໄພ ທີ່ຈະຕົກເປັນພາລະຂອງຜູ້ປະກັນໄພຢ່າງເຫມາະສົມ ໃນເວລາເຮັດສັນຍາປະກັນໄພນໍາກັນ;

3. **ແຈ້ງສະພາບການອັນຈະເປັນຜົນສະທ້ອນໃຫ້ແກ່ການສ່ຽງໄພເພີ່ມຂຶ້ນ ໃຫ້ຜູ້ປະກັນໄພຮູ້ຕາມທີ່ໄດ້ກໍານົດໄວ້ໃນໃບປະກັນໄພ;**

4. ແຈ້ງໃຫ້ຜູ້ປະກັນໄພຊາບທັນທີ ທຸກການສູນເສຍ ຫຼື ການເສຍຫາຍ ທີ່ມີການຄໍ້າປະກັນພາຍຫລັງທີ່ຕົນໄດ້ຮູ້ ແລະ ຢ່າງຊ້າບໍ່ໃຫ້ກາຍກໍານົດ 5 ວັນ. ສໍາລັບການປະກັນໄພ ກ່ຽວກັບການລັກຊັບນັ້ນຕ້ອງໃຫ້ແຈ້ງພາຍໃນກໍານົດ 36 ຊົ່ວໂມງ.

ຄູ່ສັນຍາອາດຈະຕົກລົງເພີ່ມກໍານົດເວລາ ໃນການແຈ້ງເຫດການດັ່ງກ່າວນີ້ໄວ້ໃນສັນຍາກໍໄດ້. ຜູ້ໄດ້ຮັບການປະກັນໄພ ຈະບໍ່ເສຍສິດຕາມທີ່ໄດ້ກໍານົດໄວ້ ໃນສັນຍາປະກັນໄພ ເມື່ອຕົນຫາກບໍ່ສາມາດແຈ້ງການສູນເສຍ ຫຼື ການເສຍຫາຍທີ່ເກີດຂຶ້ນນັ້ນ ໄດ້ຍ້ອນເຫດບັງເອີນ ຫຼື ເຫດສຸດວິໄສ.

## ມາດຕາ 43. ຄ່າທໍານຽມປະກັນໄພ

**ໃນກໍລະນີທີ່ຄ່າທໍານຽມປະກັນໄພ ຫາກບໍ່ໄດ້ຈ່າຍຢ່າງຖືກຕ້ອງຕາມກໍານົດເວລາແລ້ວ, ຜົນບັງຄັບປະຕິບັດຂອງໃບປະກັນໄພນັ້ນ ກໍຈະຖືກໂຈະໄວ້ ພາຍຫລັງຫມົດກໍານົດຊາວວັນ ນັບແຕ່ມື້ຜູ້ປະກັນໄພ ໄດ້ສົ່ງຄໍາເຕືອນໄປໃຫ້ຜູ້ໄດ້ຮັບການປະກັນໄພ.**

**ຜູ້ປະກັນໄພຈະຍົກເລີກໃບປະກັນໄພ ຫຼືທໍາການຮ້ອງຟ້ອງຕໍ່ສານ ເພື່ອທວງໃຫ້ຜູ້ໄດ້ຮັບການປະກັນໄພ ປະຕິບັດສັນຍາກໍໄດ້ ພາຍຫລັງຫມົດກໍານົດ 10 ວັນ ນັບແຕ່ມື້ໃບປະກັນໄພຖືກໂຈະເປັນຕົ້ນໄປ.**

ຂໍ້ກໍານົດທີ່ກ່າວໄວ້ໃນມາດຕານີ້ ຈະບໍ່ນໍາອອກປະຕິບັດ ຕໍ່ໃບປະກັນໄພທີ່ໄດ້ເຮັດຂຶ້ນໂດຍບໍລິສັດປະກັນໄພ ດັ່ງໄດ້ກ່າວໄວ້ໃນຂໍ້ 1 ແລະ ຂໍ້ 3 ມາດຕາ 4 ຂອງກົດຫມາຍສະບັບນີ້.

## ມາດຕາ 44. ການປິດບັງ ຫຼືການ ແຈ້ງການເທັດ

**ໃນກໍລະນີທີ່ຜູ້ໄດ້ຮັບການປະກັນໄພ ຫາກໄດ້ປິດບັງ ຫຼື ແຈ້ງການເທັດ ຊຶ່ງພາໃຫ້ມີການປ່ຽນເປົ້າຫມາຍຂອງການສ່ຽງໄພ ຫຼື ເຮັດໃຫ້ຜູ້ປະກັນໄພ ປະເມີນການສ່ຽງໄພນັ້ນຕໍ່າກວ່າຕົວຈິງ ແລ້ວສັນຍາປະກັນໄພກໍຈະຖືວ່າເປັນໂມຄະ.**

### ມາດຕາ 45. ການເມີນເສີຍໃນການແຈ້ງການ

**ການເມີນເສີຍ ຫຼື ການແຈ້ງການ ບໍ່ຖືກຕ້ອງຕາມຄວາມຈິງ ຂອງຜູ້ໄດ້ຮັບການປະກັນໄພນັ້ນ ກໍຈະບໍ່ເປັນສາເຫດທີ່ພາໃຫ້ສັນຍາປະກັນໄພເປັນໂມຄະ ຖ້າວ່າຜູ້ປະກັນໄພ ຫາກບໍ່ມີຫລັກຖານຢືນຢັນວ່າຜູ້ໄດ້ຮັບການປະກັນໄພບໍ່ມີຄວາມຈິງໃຈ.**

**ໃນກໍລະນີທີ່ຄວາມບໍ່ຈິງໃຈນັ້ນ ຫາກຖືກເປີດເຜີຍກ່ອນການເສຍຫາຍ ໄດ້ເກີດຂຶ້ນແລ້ວ ຜູ້ປະກັນໄພມີສິດສືບຕໍ່ສັນຍາດ້ວຍການເພີ່ມຄ່າທໍານຽມປະກັນໄພ ຖ້າຫາກໄດ້ຮັບຄວາມສົມຍອມ ຈາກຜູ້ໄດ້ຮັບການປະກັນໄພ ຫຼື ມີສິດຍົກເລີກສັນຍາ ພ້ອມທັງສົ່ງຄ່າທໍານຽມປະກັນໄພ ທີ່ໄດ້ຈ່າຍໄປແລ້ວ ສໍາລັບຊ່ວງໄລຍະ ທີ່ສັນຍາປະກັນໄພບໍ່ມີຜົນບັງຄັບນັ້ນ ຄືນໃຫ້ແກ່ຜູ້ໄດ້ຮັບການປະກັນໄພ ຖ້າຫາກຫມົດກໍານົດເວລາ 10 ວັນ ນັບແຕ່ມື້ໄດ້ສົ່ງແຈ້ງການໄປຍັງຜູ້ໄດ້ຮັບການປະກັນໄພໂດຍທາງຈົດຫມາຍ ຂຶ້ນທະບຽນໄປສະນີ ຫຼື ທາງຈົດຫມາຍ ສົ່ງໃຫ້ເຊັນຮັບເອົາ.**

ຖ້າວ່າຄວາມບໍ່ຈິງໃຈ ຫາກໄດ້ເປີດເຜີຍ ພາຍຫລັງທີ່ໄດ້ເກີດການເສຍຫາຍຂຶ້ນແລ້ວ ສິນທົດແທນປະກັນໄພ ທີ່ຈະຈ່າຍໃຫ້ຜູ້ໄດ້ຮັບການປະກັນໄພນັ້ນ ກໍໃຫ້ຫລຸດລົງຕາມອັດຕາສ່ວນຂອງຈໍານວນຄ່າທໍານຽມປະກັນໄພ ທີ່ໄດ້ຈ່າຍໄປແລ້ວ ທຽບໃສ່ຈໍານວນຄ່າທໍານຽມປະກັນໄພ ທີ່ຈະຕ້ອງໄດ້ຈ່າຍ ໃນກໍລະນີທີ່ໄດ້ແຈ້ງການສ່ຽງໄພ ຢ່າງຖືກຕ້ອງ ແລະ ຄົບຖ້ວນ.

ຄູ່ສັນຍາຈະຕົກລົງບໍ່ນໍາໃຊ້ລະບຽບການ ຫລຸດຄ່າສິນທົດແທນປະກັນໄພ ຕາມອັດຕາສ່ວນນີ້ກໍໄດ້.

### ມາດຕາ 46. ຂໍ້ຄວາມອັນໃດອັນຫນຶ່ງຂອງໃບປະກັນໄພທີ່ເປັນໂມຄະ

**ຂໍ້ຄວາມອັນໃດອັນຫນຶ່ງຂອງໃບປະກັນໄພ ທີ່ໄດ້ກໍານົດ ໃຫ້ຜູ້ໄດ້ຮັບ ການປະກັນໄພເສຍສິດຍ້ອນການລ່ວງລະເມີດກົດຫມາຍ ແລະ ລະບຽບການ ເນື້ອໃນຂໍ້ຄວາມນັ້ນ ກໍຈະເປັນໂມຄະ ເວັ້ນເສຍແຕ່ການລ່ວງລະເມີດກົດຫມາຍ ແລະ ລະບຽບການນັ້ນ ຫາກເປັນການກະທໍາຜິດໃນສະຖານ ຄະຣຸໂທດ ຫຼື ເປັນການກະທໍາຜິດໂດຍເຈດຕະ ນາໃນສະຖານ ໂທສານຸໂທດ.**

## ຫມວດທີ 2 ອາຍຸຄວາມໃນການຮ້ອງຟ້ອງ ແລະ ສານທີ່ມີສິດອໍານາດ

### ມາດຕາ 47. ອາຍຸຄວາມໃນການຮ້ອງຟ້ອງ

ການຮ້ອງຟ້ອງ ທີ່ເນື່ອງມາຈາກສັນຍາປະກັນໄພ ໃຫ້ດໍາເນີນໄດ້ພາຍໃນກໍານົດ 3 ປີ ນັບແຕ່ມື້ທີ່ເຫດການໄດ້ເກີດຂຶ້ນເປັນຕົ້ນໄປ.

ອາຍຸຄວາມຈະຖືກໂຈະໄວ້ຕາມລະບຽບການທີ່ໄດ້ບົ່ງໄວ້ ໃນມາດຕາ 35 ຂອງກົດຫມາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ຫຼື ຍ້ອນມີເຫດຜົນພຽງ ພໍ ແລະ ເນື່ອງຈາກໄດ້ມີການແຕ່ງຕັ້ງຜູ້ຊ່ຽວຊານພິສູດຄວາມຈິງ ພາຍຫລັງທີ່ການເສຍຫາຍໄດ້ເກີດຂຶ້ນ.

### ມາດຕາ 48. ສານທີ່ມີສິດອຳນາດພິຈາລະນາ ຂໍ້ຂັດແຍ່ງ

**ສານທີ່ມີສິດອຳນາດພິຈາລະນາຂໍ້ຂັດແຍ່ງ ລະຫວ່າງ ຜູ້ໄດ້ຮັບການປະກັນໄພ ກັບຜູ້ປະກັນໄພນັ້ນ ແມ່ນສານບ່ອນທີ່ຜູ້ໄດ້ຮັບການປະກັນໄພນັ້ນຢູ່. ໃນກໍລະນີທີ່ການປະກັນໄພ ກ່ຽວກັບການເສຍຫາຍຊັບຄົງທີ່ ກໍແມ່ນສານບ່ອນທີ່ຊັບນັ້ນຕັ້ງຢູ່. ສຳລັບການປະກັນໄພກ່ຽວກັບອຸບປະຕິເຫດ ແມ່ນສານບ່ອນອຸບປະຕິເຫດນັ້ນໄດ້ເກີດຂຶ້ນ.**

## ໝວດທີ 3 ການປະກັນໄພກ່ຽວກັບການເສຍຫາຍຊັບສົມບັດ

### ມາດຕາ 49. ຫລັກການຂອງສິນທົດແທນປະກັນໄພ

ສັນຍາປະກັນໄພກ່ຽວກັບ ການເສຍຫາຍຊັບສົມບັດ ແມ່ນສັນຍາການທົດແທນການເສຍຫາຍດ້ວຍສິນທົດແທນປະກັນໄພ. ຈຳນວນສິນທົດແທນປະກັນໄພ ທີ່ຜູ້ປະກັນໄພຈ່າຍໃຫ້ຜູ້ໄດ້ຮັບການປະກັນໄພນັ້ນ ບໍ່ໃຫ້ເກີນມູນຄ່າຊັບສົມບັດ ທີ່ເອົາມາປະກັນ ໃນເວລາການເສຍຫາຍ ຫາກໄດ້ເກີດຂຶ້ນ.

### ມາດຕາ 50. ການປະກັນໄພທີ່ຕ່ຳກວ່າມູນຄ່າ ຂອງຊັບສົມບັດ

**ໃນເວລາທີ່ການເສັຽຫາຍໄດ້ເກີດຂຶ້ນ ຖ້າໄດ້ຕີລາຄາເຫັນວ່າ ຊັບສົມບັດທີ່ເອົາມາປະກັນນັ້ນຫາກມີມູນຄ່າເກີນກວ່າ ມູນຄ່າຄ້ຳປະກັນແລ້ວ ຜູ້ໄດ້ຮັບການປະກັນໄພ ຈະຕ້ອງໄດ້ຮັບຜິດຊອບເອົາເອງຕໍ່ສ່ວນທີ່ເກີນນັ້ນ ເວັ້ນເສຍແຕ່ໄດ້ຕົກລົງກັນຢ່າງອື່ນໄວ້ໃນໃບປະກັນໄພເທົ່ານັ້ນ.**

### ມາດຕາ 51. ການສູນເສຍຊັບສົມບັດທີ່ເອົາມາປະກັນໄພ

ໃນກໍລະນີທີ່ຊັບສົມບັດເອົາມາປະກັນໄພ ຫາກໄດ້ຖືກສູນເສຍທັງໝົດ ຍ້ອນເຫດການຊຶ່ງບໍ່ໄດ້ກ່າວໄວ້ ໃນໃບປະກັນໄພນັ້ນ ການປະກັນໄພກໍຈະສິ້ນສຸດລົງ ແລະ ຜູ້ປະກັນໄພ ຕ້ອງສົ່ງຄ່າທຳນຽມປະກັນໄພ ສຳລັບໄລຍະເວລາ ຂອງສັນຍາປະກັນໄພ ທີ່ເຫລືອຢູ່ນັ້ນຄືນໃຫ້ແກ່ຜູ້ໄດ້ຮັບການປະກັນໄພ.

### ມາດຕາ 52. ການແທນເອົາສິດ ຂອງຜູ້ໄດ້ຮັບການປະກັນໄພ

**ຜູ້ປະກັນໄພ ທີ່ໄດ້ຈ່າຍສິນທົດແທນປະກັນໄພໄປແລ້ວ ກໍມີສິດແທນເອົາສິດຂອງຜູ້ໄດ້ຮັບການປະກັນໄພ ທຳການຮ້ອງຟ້ອງ ເພື່ອທວງເອົາເງິນຈຳນວນເທົ່າກັບສິນທົດແທນປະກັນໄພທີ່ໄດ້ຈ່າຍໄປແລ້ວນັ້ນ ຈາກບຸກຄົນທີ່ສາມ ທີ່ເປັນຕົ້ນເຫດ ຂອງການເສຍຫາຍ.**

ຜູ້ປະກັນໄພ ຈະບໍ່ມີສິດທຳການຮ້ອງຟ້ອງ ເພື່ອທວງເອົາເງິນຄືນຖ້າວ່າບຸກຄົນທີ່ເປັນຕົ້ນເຫດຂອງການເສຍຫາຍນັ້ນ ຫາກແມ່ນຍາດພີ່ນ້ອງສາຍຕັ້ງ, ແມ່ນຜູ້ທີ່ໄດ້ຮັບມອບໝາຍໃຫ້ເຮັດວຽກແທນ, ແມ່ນພະນັກງານຂອງຜູ້ໄດ້ຮັບການປະກັນໄພ ແລະ ແມ່ນບຸກຄົນທີ່ຢູ່ໃນເຮືອນຂອງຜູ້ໄດ້ຮັບການປະກັນໄພ ຢ່າງເປັນປະຈຳ ເວັ້ນເສຍແຕ່ໃນກໍລະນີ ທີ່ບຸກຄົນເຫລົ່ານີ້ ຫາກໄດ້ມີເຈດຕະນາທຳລາຍ.

## ໝວດ ທີ 4 ການປະກັນໄພກ່ຽວກັບຕົວບຸກຄົນ

### ມາດຕາ 53. ຫລັກການສະເພາະ ໃນການປະກັນໄພ ກ່ຽວກັບຕົວບຸກຄົນ

ໃນການປະກັນໄພ ກ່ຽວກັບຕົວບຸກຄົນ ຈະແມ່ນການປະກັນໄພຊີວິດ ຫລື ການປະກັນໄພ ກ່ຽວກັບອຸບປະຕິເຫດ ຊຶ່ງພາໃຫ້ເສຍຊີວິດ ຫລື ເສຍສຸຂະພາບກໍຕາມ ສິນປະກັນໄພນັ້ນ ໃຫ້ກຳນົດໄວ້ໃນໃບປະກັນໄພ.

ໃນການປະກັນໄພ ກ່ຽວກັບຕົວບຸກຄົນນັ້ນ ເມື່ອຜູ້ປະກັນໄພ ຫາກໄດ້ຈ່າຍສິນປະກັນໄພແລ້ວ ກໍຈະບໍ່ມີສິດແທນເອົາສິດ ຂອງຜູ້ເຊັນເອົາການປະກັນໄພ ຫລື ຜູ້ໄດ້ຮັບຜົນປະໂຫຍດຈາກສັນຍາປະກັນໄພ ເພື່ອທຳການຮ້ອງຟ້ອງ ທວງເອົາເງິນທີ່ໄດ້ຈ່າຍໄປແລ້ວນັ້ນ ຈາກບຸກຄົນທີ່ສາມ ຊຶ່ງໄດ້ກໍ່ຄວາມເສຍຫາຍ.

### ມາດຕາ 54. ການປະກັນໄພຊີວິດ

**ບຸກຄົນຜູ້ໃດ ຜູ້ໜຶ່ງ ກໍມີສິດເຮັດສັນຍາປະກັນໄພຊີວິດ ສຳລັບຕົນເອງ ຫລື ສຳລັບບຸກຄົນທີ່ສາມ ເມື່ອບຸກຄົນຜູ້ນີ້ ຫາກມີຄວາມຍິນຍອມ ເປັນລາຍລັກອັກສອນ ພ້ອມທັງບອກເຖິງຈຳນວນສິນປະກັນໄພ.**

**ຫ້າມເຮັດສັນຍາປະກັນໄພ ກ່ຽວກັບການເສຍຊີວິດຂອງເດັກທີ່ມີອາຍຸ ຕ່ຳກວ່າ 15 ປີ, ຂອງຜູ້ຖືກຫ້າມໃຊ້ສິດ, ຂອງບຸກຄົນທີ່ມີອາການເສຍສະຕິ ຫລື ເປັນບ້າເສຍຈິດ ຫລື ພວມຮັບການປິ່ນປົວ ຢູ່ໂຮງໝໍໂລກຈິດ.**

### ມາດຕາ 55. ເນື້ອໃນຂອງສັນຍາປະກັນໄພ ກ່ຽວກັບຕົວບຸກຄົນ

**ໃນສັນຍາປະກັນໄພ ຫລື ໃບປະກັນໄພຊີວິດ ນອກຈາກເນື້ອໃນທີ່ຈຳເປັນສຳລັບເຮັດໃບປະກັນໄພ ທຸກຂະແໜງແລ້ວ ຕ້ອງໃຫ້ບອກເນື້ອໃນ ດັ່ງຕໍ່ໄປນີ້ຕື່ມອີກ:**

1. ຊື່ ແລະ ນາມສະກຸນ, ວັນເດືອນປີເກີດ ຂອງຜູ້ໜຶ່ງ ຫລື ຫລາຍຄົນ ທີ່ຈະໄດ້ຮັບການປະກັນໄພຊີວິດ;
2. ຊື່ ແລະ ນາມສະກຸນ ຂອງຜູ້ໄດ້ຮັບຜົນປະໂຫຍດ ຖ້າຫາກມີ;
3. ເຫດການ ຫລື ຂໍ້ຄວາມທີ່ໃຫ້ສິດ ໄດ້ຮັບຈຳນວນສິນປະກັນໄພ;
4. ເງື່ອນໄຂທີ່ພາໃຫ້ສິນປະກັນໄພຫລຸດລົງ ຖ້າຫາກວ່າໄດ້ຕົກລົງກັນ ໃນສັນຍາປະກັນໄພ.

### ມາດຕາ 56. ການຂ້າຕົວຕາຍ ແລະ ການຄາດຕະກຳ

ສັນຍາປະກັນໄພ ກ່ຽວກັບການເສຍຊີວິດ ຈະບໍ່ມີຜົນບັງຄັບປະຕິບັດ ຖ້າວ່າຜູ້ໄດ້ຮັບການປະກັນໄພ ຫາກໄດ້ຂ້າຕົວເອງຕາຍ, ແຕ່ຜູ້ປະກັນໄພ ກໍຍັງຈະຕ້ອງຈ່າຍເງິນໃຫ້ຜູ້ທີ່ມີສິດໄດ້ຮັບຕາມຈຳນວນເທົ່າກັນກັບ ທີ່ມີຢູ່ໃນຄັງແຮ ຕາມຫລັກສູດຄິດໄລ່.

ຖ້າວ່າໃບປະກັນໄພ ຫາກໄດ້ກຳນົດວ່າ ຜູ້ປະກັນໄພ ຈະຈ່າຍສິນປະກັນໄພ ໃຫ້ຜູ້ໄດ້ຮັບການປະກັນໄພ ໃນກໍລະນີທີ່ຜູ້ກ່ຽວຫາກຂ້າຕົວເອງຕາຍນັ້ນ ສັນຍາປະກັນໄພ ຈະມີຜົນບັງຄັບປະຕິບັດ ໄດ້ກໍຕໍ່ເມື່ອ ເວລາເຮັດໃບປະກັນໄພ ທີ່ເຊັນນຳກັນ ໄດ້ຜ່ານພົ້ນໄປ ສອງປີແລ້ວ.

ສັນຍາປະກັນໄພ ກໍຈະບໍ່ມີຜົນບັງຄັບປະຕິບັດ ໃນເມື່ອຜູ້ໄດ້ຮັບຜົນປະໂຫຍດ ຫາກໄດ້ເຮັດໃຫ້ຜູ້ໄດ້ຮັບການປະກັນໄພ ເສຍຊີວິດ ໂດຍເຈດຕະນາ.

## ໝວດ ທີ 5 ການປະກັນໄພ ກ່ຽວກັບຄວາມຮັບຜິດຊອບທາງແພ່ງ

### ມາດຕາ 57. ຄວາມຮັບຜິດຊອບໂດຍບໍ່ຖືຄວາມຜິດ.

ຫລັກການ ທີ່ໄດ້ບົ່ງໄວ້ ໃນພາກທີ່ IV ນີ້ ກໍໃຫ້ປະຕິບັດ ຕໍ່ຜູ້ທີ່ໄດ້ຮັບເຄາະຮ້າຍຈາກອຸບປະຕິເຫດ ໃນການສັນຈອນ ທາງບົກ ທີ່ເນື່ອງມາຈາກ ການນຳໃຊ້ຍານພາຫະນະ ທີ່ແລ່ນດ້ວຍເຄື່ອງຈັກ ພ້ອມທັງລົດພ່ວງ ຫລື ເຄິ່ງລົດພ່ວງ ເວັ້ນເສຍແຕ່ລົດໄຟ ທີ່ແລ່ນໄປຕາມທາງຂອງມັນ.

**ຜູ້ໄດ້ຮັບເຄາະຮ້າຍ ຕ້ອງໄດ້ຮັບການທົດແທນຄ່າເສຍຫາຍຍ້ອນອຸບປະຕິເຫດ ຊຶ່ງຜູ້ກ່ຽວໄດ້ຮັບໂດຍບໍ່ໃຫ້ຍົກເອົາຄວາມຜິດ ຂອງຜູ້ກ່ຽວມາເປັນຂໍ້ອ້າງເພື່ອຫລີກຈາກການທົດແທນ.**

ຜູ້ໄດ້ຮັບເຄາະຮ້າຍ ຈະບໍ່ໄດ້ຮັບການທົດແທນ ຄ່າເສຍຫາຍທີ່ຕົນໄດ້ຮັບ ຈາກອຸບປະຕິເຫດ ຖ້າວ່າຕົນເອງຫາກເປັນຜູ້ມີເຈດຕະນາ ເຮັດໃຫ້ອຸບປະຕິເຫດທີ່ພາໃຫ້ມີການເສຍຫາຍນັ້ນເກີດຂຶ້ນ.

### ມາດຕາ 58. ການທົດແທນການເສຍຫາຍ

ຜູ້ປະກັນໄພ ຊຶ່ງຄ້ຳປະກັນ ຍານພາຫະນະທາງບົກ ທີ່ແລ່ນດ້ວຍເຄື່ອງຈັກ ຕ້ອງທຳການສະເໜີມອບສິນທົດແທນປະກັນໄພ ໃຫ້ຜູ້ໄດ້ຮັບເຄາະຮ້າຍ ພາຍໃນກຳນົດ ຫົກເດືອນ ຢ່າງຊ້າ ນັບແຕ່ມື້ໄດ້ເກີດອຸບປະຕິເຫດ ເປັນຕົ້ນໄປ.

ໃນກໍລະນີທີ່ຜູ້ໄດ້ຮັບເຄາະຮ້າຍຫາກໄດ້ຮັບບາດເຈັບຫລືໄດ້ເສຍຊີວິດສິນທົດແທນປະກັນໄພນັ້ນຕ້ອງມອບກ່ອນ ສ່ວນໃດສ່ວນໜຶ່ງ ທີ່ຈຳເປັນ ໃຫ້ຜົວ ຫລື ເມຍ, ຖ້າວ່າພວກດັ່ງກ່າວ ຫາກໄດ້ເສຍຊີວິດແລ້ວ ກໍໃຫ້ມອບໃຫ້ຜູ້ທີ່ມີສິດສືບທອດ ມູນມໍຣະດົກ ຕາມກົດໝາຍ ພາຍໃນກຳນົດ ຢ່າງຊ້າບໍ່ໃຫ້ເກີນສາມສິບວັນ.

ຈຳນວນສິນທົດແທນ ປະກັນໄພ ທີ່ຈະມອບໃຫ້ ຜູ້ໄດ້ຮັບເຄາະຮ້າຍ ອາດຈະກຳນົດ ແບບກະຕວງເອົາກໍໄດ້ ຖ້າຫາກວ່າ ໃນກຳນົດ ສາມເດືອນ ນັບແຕ່ມື້ໄດ້ເກີດອຸບປະຕິເຫດຂຶ້ນນັ້ນ ຜູ້ປະກັນໄພຫາກຍັງບໍ່ທັນສາມາດ ຮູ້ໄດ້ວ່າສະພາບ ຂອງຜູ້ທີ່ໄດ້ຮັບເຄາະຮ້າຍນັ້ນ ໄດ້ກັບຄືນສູ່ຄວາມເປັນປົກກະຕິແລ້ວ ຫລື ຍັງ.

**ມາດຕາ 59. ການປະກັນໄພຍານພາຫະນະ**

ບຸກຄົນ ຫລື ນິຕິບຸກຄົນ ທີ່ນຳໃຊ້ຍານພາຫະນະ ທາງບົກ ທີ່ແລ່ນດ້ວຍເຄື່ອງຈັກ ພ້ອມດ້ວຍລົດພ່ວງ ຫລື ເຄິ່ງລົດພ່ວງ ເຂົ້າໃນການສັນຈອນ ຕ້ອງທຳການຄຸ້ມກັນ ຍານພາຫະນະຂອງຕົນ ດ້ວຍການປະກັນໄພ.

ຂອບເຂດຂອງການຄ້ຳປະກັນ, ວິທີການປະກອບ ແລະ ຄຸນຄ່ານຳໃຊ້ ເອກະສານຢັ້ງຢືນ ສຳລັບການຕິດຕາມກວດກາ ການປະກັນໄພ ຍານພາຫະນະນັ້ນ ໄດ້ກຳນົດໄວ້ໃນດຳລັດຂອງສະພາລັດຖະມົນຕີ.

**ມາດຕາ 60. ການເສຍສິດ ຍ້ອນການມຶນເມົາ**

**ໃນກໍລະນີ ທີ່ເກີດມີອຸບປະຕິເຫດ ຊຶ່ງຜູ້ໄດ້ຮັບການປະກັນໄພນັ້ນ ໄດ້ຂັບຂີ່ຍານພາຫະນະ ຢູ່ໃນສະພາບເມົາເຫລົ້າ ຫລື ຢາເສບຕິດ ຈົນບໍ່ສາມາດຈະຄວບຄຸມຍານພາຫະນະໄດ້ ກໍໃຫ້ຖືວ່າ ຂໍ້ຄວາມຂອງສັນຍາ ທີ່ໄດ້ກຳນົດ ກ່ຽວກັບການຄ້ຳປະກັນ ຂອງຜູ້ໄດ້ຮັບການ ປະກັນໄພນັ້ນ ເປັນໂມຄະ ເຖິງວ່າໃນສັນຍາປະກັນໄພນັ້ນ ຈະບໍ່ໄດ້ກຳນົດການເສຍສິດ ຍ້ອນການເມົາເຫລົ້າ ຫລື ຢາເສບຕິດໄວ້ກໍຕາມ.**

**ມາດຕາ 61. ການອອກ ແລະ ການມອບໃບຢັ້ງຢືນປະກັນໄພ**

**ບໍລິສັດປະກັນໄພ ຕ້ອງອອກໃບຢັ້ງຢືນປະກັນໄພ ໃຫ້ຜູ້ໄດ້ຮັບການປະກັນໄພ ສຳລັບຍານພາຫະນະແຕ່ລະຄັນ ໂດຍບໍ່ຄິດມູນຄ່າ.**

**ການເອົາການປະກັນໄພ ແລະ ການມອບໃບຢັ້ງຢືນປະກັນໄພ ຈະເຮັດຂຶ້ນໄດ້ກໍຕໍ່ເມື່ອຜູ້ນຳໃຊ້ຍານພາຫະນະ ຫາກໄດ້ນຳສະເຫນີໃບຢັ້ງຢືນ ກວດກາສະພາບເຕັກນິກ ຂອງຍານພາຫະນະ ຕໍ່ບໍລິສັດປະກັນໄພແລ້ວເທົ່ານັ້ນ ເວັ້ນເສຍແຕ່ຍານພາຫະນະ ທີ່ບໍ່ມີລະບຽບການ ໃນການ ກວດກາສະພາບເຕັກນິກ.**

ໃບຢັ້ງຢືນປະກັນໄພ ໃຫ້ໄວ້ຕິດຕົວຜູ້ຂັບຂີ່ ຫລື ຕິດໄວ້ກັບຍານພາຫະນະ ຢູ່ບ່ອນທີ່ສາມາດເຫັນໄດ້ງ່າຍ.

## ພາກ ທີ V ມາດຕະການຕໍ່ຜູ້ກະທຳຜິດ

**ມາດຕາ 62. ການດຳເນີນທຸລະກິດປະກັນໄພ ໂດຍບໍ່ໄດ້ຮັບອະນຸຍາດ.**

ບຸກຄົນຜູ້ໃດ ຫາກໄດ້ທຳການ ສະເຫນີຕໍ່ມວນຊົນ ໃນຈຸດປະສົງ ເພື່ອໃຫ້ເອົາປະກັນໄພ ຫລື ໄດ້ເຊັນສັນຍາປະກັນໄພ ໃນນາມຂອງບໍລິສັດປະກັນໄພ ຊຶ່ງບໍ່ມີການສ້າງຕັ້ງຕົວຈິງ ຫລື ຊຶ່ງໄດ້ສະເຫນີ ຂໍອະນຸຍາດສ້າງຕັ້ງແລ້ວແຕ່ບໍ່ທັນໄດ້ຮັບອະນຸຍາດ ໃຫ້ດຳເນີນທຸລະກິດ ປະກັນໄພເປັນທາງການ ກໍຈະຖືກປັບໃຫມ ແຕ່ 500.000 ກີບ ຫາ 1.000.000ກີບ.

**ບຸກຄົນຜູ້ໃດຫາກໄດ້ທຳການ ສະເໜີຕໍ່ມວນຊົນ ໃນຈຸດປະສົງ ເພື່ອໃຫ້ເອົາປະກັນໄພ ຫລື ໄດ້ເຊັນສັນຍາປະກັນໄພ ໃນຂະແໜງປະກັນໄພ ທີ່ຍັງບໍ່ທັນໄດ້ຮັບອະນຸຍາດ ໃຫ້ດຳເນີນທຸລະກິດເປັນທາງການ ກໍຈະຖືກປັບໃໝແຕ່ 300.000 ກີບ ຫາ 500.000 ກີບ.**

ບຸກຄົນຜູ້ໃດ ຫາກໄດ້ທຳໜ້າທີ່ເປັນຄົນກາງ ປະກັນໄພ ໂດຍແອບ ອ້າງວ່າ ຕົນໄດ້ຖືກມອບໝາຍ ຫລື ໄດ້ຮັບມອບໝາຍ ໂດຍກົງ ຈາກບໍລິສັດປະກັນໄພ ທີ່ມີສິດດຳເນີນ ທຸລະກິດ ປະກັນໄພ ຕາມກົດໝາຍ ກໍຈະຖືກປັບໃໝແຕ່ 50.000 ກີບ ຫາ 100.000 ກີບ.

ບຸກຄົນຜູ້ໃດ ຫາກໄດ້ມອບໝາຍ ວຽກງານປະກັນໄພ ທີ່ໄດ້ກ່າວມາຂ້າງເທິງນີ້ ໃຫ້ຜູ້ອື່ນປະຕິບັດ ໂດຍຮູ້ດີວ່າຕົນບໍ່ມີສິດ ແລະ ໜ້າທີ່ແລ້ວ ກໍຈະຖືກປັບໃໝແຕ່ 500.000 ກີບ ຫາ 1.000.000 ກີບ.

ໃນກໍລະນີທີ່ການກະທຳ ຊຶ່ງໄດ້ກ່າວມາຂ້າງເທິງນີ້ ຫາກມີອົງປະກອບການກະທຳຜິດກໍຈະຖືກລົງໂທດ ຕາມກົດໝາຍອາຍາ.

### ມາດຕາ 63. ການລະເມີດລະບຽບກ່ຽວກັບມາດຕະຖານ ແລະ ການຈຳກັດຜົນປະໂຫຍດ

**ບຸກຄົນຜູ້ໃດ ຫາກໄດ້ລະເມີດລະບຽບການ ຕາມທີ່ໄດ້ບົ່ງໄວ້ ໃນມາດຕາ 14 ແລະ 15 ຂອງກົດໝາຍສະບັບນີ້ ກໍຈະຖືກປັບໃໝແຕ່ 500.000 ກີບ ຫາ 1.000.000 ກີບ.**

### ມາດຕາ 64. ການສະເໜີ ແລະ ການເຜີຍແຜ່ເອກະສານເທັດ

**ພະນັກງານ ຂອງບໍລິສັດປະກັນໄພ ຜູ້ໃດ ຫລື ຄົນກາງ ປະກັນໄພຜູ້ໃດ ຫາກໄດ້ນຳສະເໜີເອກະສານທີ່ມີເນື້ອໃນເທັດ ໄປສະເໜີຕໍ່ ກະຊວງເສດຖະກິດແຜນການ ແລະ ການເງິນ ຫລື ອົງການອື່ນໆ ຂອງລັດ ທີ່ມີໜ້າທີ່ກ່ຽວຂ້ອງ ຫລື ໄດ້ແຈ້ງ ແລະ ເຜີຍແຜ່ເອກະສານເທັດດັ່ງກ່າວຕໍ່ມວນຊົນ ກໍຈະຖືກປັບໃໝແຕ່ 100.000 ກີບ ຫາ 500.000 ກີບ.**

### ມາດຕາ 65. ການທີ່ບໍ່ສະໜອງເອກະສານ

**ບໍລິສັດປະກັນໄພໃດ ຫາກບໍ່ສະໜອງເອກະສານ ຫລື ແບບພິມເຜີຍແຜ່ຕາມທີ່ໄດ້ບົ່ງໄວ້ ໃນກົດໝາຍສະບັບນີ້ ກໍຈະຖືກປັບໃໝແຕ່ 50.000 ກີບ ຫາ 100.000 ກີບ.**

### ມາດຕາ 66. ການລະເມີດກົດລະບຽບຂອງບໍລິສັດ ແລະ ລະບອບການເງິນ

**ທຸກການລະເມີດກົດລະບຽບຂອງບໍລິສັດ ແລະ ລະບຽບການ ກ່ຽວກັບຄັງແຮ ດ້ານວິຊາການ ການຝາກໝູນ ຊັບສິນ ແລະ ຄວາມສາມາດໃນການໃຊ້ໜີ້ສິນ ກໍຈະຖືກປັບໃໝແຕ່ 500.000 ກີບ ຫາ 2.000.000ກີບ. ໃນກໍລະນີ ທີ່ບໍ່ເຂັດຫລາບ ຈະຖືກພິຈາລະນາ ຖອນສິດດຳເນີນທຸລະກິດ.**

ມາດຕາ 67. ການລະເມີດກົດລະບຽບ ການເປັນຄົນກາງ ປະກັນໄພ

**ບຸກຄົນຜູ້ໃດ ຫາກໄດ້ລະເມີດລະບຽບການທີ່ໄດ້ກ່າວໄວ້ ໃນມາດຕາ 25, 26, 27 ຂອງກົດໝາຍສະບັບນີ້ ກໍຈະຖືກປັບໃໝແຕ່ 20.000 ກີບ ຫາ 100.000 ກີບ.**

ມາດຕາ 68. ການລະເມີດລະບຽບການປະກັນໄພ ກ່ຽວກັບຍານພາຫະນະ

**ບຸກຄົນ ຫລື ນິຕິບຸກຄົນ ຜູ້ໃດ ຫາກໄດ້ລະເມີດ ລະບຽບການ ຕາມທີ່ໄດ້ກ່າວໄວ້ ໃນມາດຕາ 59 ຂອງກົດໝາຍສະບັບນີ້ ກໍຈະຖືກປັບໃໝແຕ່ 3.000 ກີບ ຫາ 30.000 ກີບ.**

## ພາກ ທີ VI ບົດບັນຍັດສຸດທ້າຍ

ມາດຕາ 69. ການຈັດຕັ້ງປະຕິບັດ

ສະພາລັດຖະມົນຕີ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈະອອກຂໍ້ກໍານົດປະຕິບັດກົດໝາຍສະບັບນີ້.

ກົດໝາຍສະບັບນີ້ ໄດ້ລົງຄະແນນສຽງຮັບຮອງເອົາຢ່າງເປັນເອກະສັນ ໃນກອງປະຊຸມສະໄໝສາມັນຄົບຄະນະ ເທື່ອທີຫ້າ ຂອງສະພາປະຊາຊົນສູງສຸດ (ຊຸດທີ II) ໃນວັນທີ 29 ພະຈິກ 1990 ເວລາ 15 ໂມງ 40 ນາທີ.

ປະທານສະພາປະຊາຊົນສູງສຸດ

ໜູຮັກ ພູມສະຫວັນ